ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

# ນະໂຍບາຍແຫ່ງຊາດ
# ວ່າດ້ວຍ
# ການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ

ມິຖຸນາ, 2022

# ສາລະບານ


ຄຳນຳ .............................................................................................................. 1

**ພາກທີ I ພາກສະເໜີ** .................................................................................... 2

1. **ສະພາບລວມ** ............................................................................................ 2
2. **ທ່າແຮງ** ...................................................................................................... 3
   - 2.1 ທ່າແຮງພື້ນຖານ ແລະ ປັດໄຈການຜະລິດ ........................................................ 3
   - 2.2 ທ່າແຮງດ້ານຕະຫຼາດສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ............ 4
   - 2.3 ທ່າແຮງດ້ານນະໂຍບາຍຂອງລັດ ໃນການສົ່ງເສີມການລົງທຶນ .................................. 4
   - 2.4 ທ່າແຮງດ້ານພື້ນຖານໂຄງລ່າງຄົມມະນາຄົມ ....................................................... 5
   - 2.5 ລະບຽບຄຸ້ມຄອງ ແລະ ມາດຕະການດ້ານວິຊາການ ................................................ 5
3. **ບັນຫາ** ...................................................................................................... 5
   - 3.1 ບັນຫາລວມ ............................................................................................ 5
   - 3.2 ບັນຫາຂອງຊາວກະສິກອນ ແລະ ຜູ້ປະກອບການ ................................................ 5
   - 3.3 ບັນຫາດ້ານປັດໄຈການຜະລິດ ..................................................................... 6
   - 3.4 ບັນຫາດ້ານການຕະຫຼາດ ແລະ ລາຄາ ............................................................ 6
4. **ກາລະໂອກາດ ຂອງ ສປປ ລາວ** ........................................................................ 7
5. **ສິ່ງທ້າທາຍ** ................................................................................................. 7

**ພາກທີ II ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດການນຳໃຊ້** ............................................. 8

1. ຈຸດປະສົງ ...................................................................................................... 8
2. ເປົ້າໝາຍ ..................................................................................................... 8
   - 2.1 ເປົ້າໝາຍທາງດ້ານເສດຖະກິດ ..................................................................... 8
   - 2.2 ເປົ້າໝາຍທາງດ້ານສັງຄົມ .......................................................................... 8
   - 2.3 ເປົ້າໝາຍທາງດ້ານສິ່ງແວດລ້ອມ .................................................................. 9
3. ຂອບເຂດການນຳໃຊ້ .......................................................................................... 9

**ພາກທີ III ເນື້ອໃນຂອງນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນ້ຳ** ................................ 9

1. ນະໂຍບາຍ ກ່ຽວກັບທີ່ດິນສຳລັບການລ້ຽງສັດ ແລະ ສັດນ້ຳ ............................................ 9
2. ນະໂຍບາຍ ດ້ານພະລັງງານ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ......................................... 10
3. ນະໂຍບາຍ ການປະກັນຄວາມສ່ຽງ ຕໍ່ການລ້ຽງສັດ ແລະ ສັດນ້ຳ ...................................... 11
4. ນະໂຍບາຍ ສົ່ງເສີມດ້ານຄຸນນະພາບຂອງຜະລິດຕະພັນສັດ ແລະ ສັດນ້ຳ ............................. 11
5. ນະໂຍບາຍ ສົ່ງເສີມດ້ານ ການຄ້າ ແລະ ການຕະຫຼາດ .................................................. 12
6. ນະໂຍບາຍ ດ້ານແຮງງານ ແລະ ສະຫວັດດີການຕໍ່ຜູ້ລ້ຽງສັດ ແລະ ສັດນ້ຳ .......................... 13
7. ນະໂຍບາຍ ດ້ານບຸກຄະລາກອນ ດ້ານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ....................... 13
8. ນະໂຍບາຍ ດ້ານການເງິນ ແລະ ເຂົ້າເຖິງແຫຼ່ງທຶນ ..................................................... 14

**ພາກທີ IV ມາດຕະການຈັດຕັ້ງປະຕິບັດ** ...................................................................... 16

**ພາກທີ V ການຕິດຕາມ ແລະ ປະເມີນຜົນ** ................................................................... 18

**ເອກະສານອ້າງອີງ** ............................................................................................. 19

**ເອກະສານຊ້ອນທ້າຍ 1.** ....................................................................................... 20

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 196 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 06.07.2022

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້

## ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ

- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມັງກອນ 2022 ສະບັບເລກທີ 01/ລບ, ລົງວັນທີ 01 ກຸມພາ 2022;
- ອີງຕາມ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ ເພື່ອປະກາດໃຊ້ຕາມລະບຽບການ ສະບັບລົງວັນທີ 20 ມິຖຸນາ 2022;
- ອີງຕາມ ເອກະສານສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3066/ກປ, ລົງວັນທີ 20 ມິຖຸນາ 2022.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ.

**ມາດຕາ 2** ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດສະບັບດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານຊາບ ເປັນແຕ່ລະໄລຍະ.

**ມາດຕາ 3** ບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດ ສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ

# ຄຳນຳ

ນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ ສະບັບນີ້ ສ້າງຂຶ້ນເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງ ພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃຫ້ເປັນຮູບປະທຳ ຊຶ່ງແມ່ນພາລະກິດຕົ້ນຕໍ ໃນການສ້າງພື້ນຖານທີ່ໜັກແໜ້ນໃຫ້ແກ່ການພັດທະນາ ເພື່ອນຳເອົາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ສືບຕໍ່ກ້າວໄປສູ່ຈຸດໝາຍສັງຄົມນິຍົມ. ນະໂຍບາຍສະບັບນີ້ ໄດ້ກຳນົດແນວທາງນະໂຍບາຍຂອງພາກລັດ ເພື່ອອຳນວຍຄວາມສະດວກ, ຊຸກຍູ້ ສົ່ງເສີມການພັດທະນາການລ້ຽງສັດ ແລະ ສັດນ້ຳຂອງ ສປປ ລາວ ແນໃສ່ສົ່ງເສີມການລ້ຽງສັດ ຂອງບຸກຄົນ, ກຸ່ມ, ສະຫະກອນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ປະກອບການກ່ຽວກັບການລ້ຽງສັດ ແລະ ສັດນ້ຳ ແບບເປັນຟາມ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແນໃສ່ຮັບປະກັນການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງພໍ, ປອດໄພ, ມີໂພຊະນາການ, ເປັນສິນຄ້າ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນດ້ານການຄ້າຂອງ ສປປ ລາວ ໃຫ້ນັບມື້ນັບສູງຂຶ້ນ.

ນະໂຍບາຍສະບັບນີ້ ຍັງມີຄວາມສຳຄັນໃນການສ້າງເງື່ອນໄຂໃຫ້ແກ່ຂະແໜງການ ເພື່ອຈັດຕັ້ງປະຕິບັດຄາດໝາຍສູ້ຊົນດ້ານການຜະລິດສະບຽງອາຫານ ແລະ ຜະລິດສິນຄ້າກະສິກຳ ທີ່ໄດ້ກຳນົດໄວ້ໃນທິດທາງແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງ ຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ສຳເລັດຜົນ. ນອກຈາກນັ້ນ, ຍັງເປັນການກຽມຄວາມພ້ອມຂອງຂະແໜງການ ເພື່ອເຊື່ອມໂຍງກັບການເຂົ້າຮ່ວມໃນເອຫີພາກພື້ນ ແລະ ສາກົນທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ ອີກດ້ວຍ.

ເນື້ອໃນຂອງ ນະໂຍບາຍແຫ່ງຊາດ ວ່າດ້ວຍ ການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ສະບັບນີ້ ແມ່ນ ລວມເອົາ ການຕີລາຄາສະພາບລວມ ກ່ຽວກັບ ການລ້ຽງສັດ ແລະ ສັດນ້ຳ, ການວິເຄາະເຖິງ ທ່າແຮງ, ບັນຫາ, ກາລະໂອກາດ, ສິ່ງທ້າທາຍ, ເຫດຜົນ, ຄວາມຈຳເປັນ, ເປົ້າໝາຍ ແລະ ເນື້ອໃນ ๘ ຂໍ້ ເພື່ອສະໜັບສະໜູນ ແລະ ສ້າງສິ່ງເອື້ອອຳນວຍ ໃຫ້ແກ່ລະບົບຕ່ອງໂສ້ຂອງມູນຄ່າຂອງການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ ນັບຕັ້ງແຕ່ ຂັ້ນຕອນການຜະລິດ ໄປຈົນເຖິງ ການປຸງແຕ່ງ, ຈໍລະຈອນ ແລະ ການຄ້າ. ນອກຈາກນັ້ນ, ຍັງມີການຄາດຄະເນຜົນໄດ້ຮັບ, ກຳນົດມາດຕະການ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນ. ນະໂຍບາຍສະບັບນີ້ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນໄດ້ ກໍຕໍ່ເມື່ອໄດ້ມີການປະກອບສ່ວນ ຢ່າງຕັ້ງໜ້າຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ.

ກະຊວງກະສິກຳ ແລະ ປ່າໄມ້ ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈເປັນຢ່າງສູງ ມາຍັງພະນັກງານທຸກໆທ່ານ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ທຸ່ມເທ ເຫື່ອແຮງ, ສະຕິປັນຍາ ແລະ ເວລາທີ່ມີຄຸນຄ່າຂອງຕົນ ເຂົ້າໃນການສ້າງຮ່າງນະໂຍບາຍສະບັບນີ້ ຈົນສຳເລັດ. ນະໂຍບາຍສະບັບນີ້ ອາດມີບາງເນື້ອໃນທີ່ຍັງບໍ່ ສອດຄ່ອງ ແລະ ຄົບຖ້ວນ. ດັ່ງນັ້ນ, ພວກເຮົາຈຶ່ງມີຄວາມຍິນດີທີ່ຈະຮັບເອົາທຸກຄຳຄິດເຫັນທີ່ເປັນປະໂຫຍດຂອງ ບັນດາທ່ານ ເພື່ອນຳໄປປັບປຸງ ຫຼື ແກ້ໄຂໃຫ້ສອດຄ່ອງໃນຂັ້ນຕໍ່ໄປ. ພ.ໜ

ນະຄອນຫຼວງວຽງຈັນ, ວັນທີ 20 JUN 2022

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ — ລັດຖະມົນຕີ

ປອ. ເພັດ ພົມພິພັກ

# ພາກທີ I
# ພາກສະເໜີ

## 1. ສະພາບລວມ

ດັ່ງທີ່ພວກເຮົາຮັບຮູ້ກັນແລ້ວວ່າ: ປະໂຫຍດຂອງສັດທີ່ມີຕໍ່ຄົນເຮົາແມ່ນມີຢ່າງຫຼວງຫຼາຍ ແຕ່ທີ່ເຫັນກັນຢ່າງຈະແຈ້ງທີ່ສຸດກໍຄື: ສັດແມ່ນແຫຼ່ງອາຫານປະເພດຊີ້ນເພື່ອບໍາລຸງລ້ຽງຮ່າງກາຍຂອງຄົນເຮົາໃຫ້ແຂງແຮງ, ສັດເປັນວັດຖຸດິບປ້ອນໂຮງງານປຸງແຕ່ງ, ໃຊ້ເປັນແຮງງານລາກແກ່, ເປັນຜູ້ຊ່ວຍສ້າງມູນຄ່າເພີ່ມໃຫ້ແກ່ການປູກຝັງ ແລະ ເປັນຄັງແຮສໍາຮອງ ເພື່ອຫຼຸດຜ່ອນຄວາມສ່ຽງເມື່ອເກີດການລົ້ມເຫຼວຂອງກິດຈະກໍາອື່ນ. ນອກຈາກນັ້ນແລ້ວ, ການລ້ຽງສັດຍັງຊ່ວຍແກ້ບັນຫາໄພຫວ່າງງານ, ກະຈາຍແຮງງານໄປສູ່ຊົນນະບົດ, ສິ່ງເສດເຫຼືອຈາກສັດກໍສາມາດນໍາໄປເປັນປະໂຫຍດໃຫ້ແກ່ ການປູກພືດ ແລະ ປັບປຸງບໍາລຸງດິນໃຫ້ອຸດົມສົມບູນອີກດ້ວຍ.

ການລ້ຽງສັດ ແລະ ສັດນໍ້າ ແມ່ນມີບົດບາດສໍາຄັນຫຼາຍຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ແລະ ປະກອບຢູ່ໃນໂຄງປະກອບເສດຖະກິດຂອງຊາດ ຊຶ່ງຍາມໃດພັກ ແລະ ລັດຖະບານກໍໄດ້ຖືສໍາຄັນ ຊຶ່ງວຽກງານດັ່ງກ່າວ ໄດ້ປະກອບສ່ວນເຂົ້າໃນມູນຄ່າລວມຍອດຜະລິດພັນພາຍໃນຂອງຊາດໃນແຕ່ລະໄລຍະ. ໃນປີ 2020 ຂະແໜງການລ້ຽງສັດ ແລະ ການປະມົງ ໄດ້ປະກອບສ່ວນຢູ່ໃນລວມຍອດຜະລິດຕະພັນພາຍໃນ ກວ່າ 7.500 ຕື້ກີບ ຫຼື ປະມານ 4,4% ຂອງມູນຄ່າລວມຍອດຜະລິດຕະພັນພາຍໃນ, ໃນແຜນພັດທະນາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025) ຂະແໜງການລ້ຽງສັດ ແລະ ການປະມົງ ມີເປົ້າໝາຍຜະລິດຊີ້ນ, ໄຂ່ ແລະ ປາໃຫ້ບັນລຸ 577.000 ໂຕນ ຕອບສະໜອງອັດຕາການບໍລິໂພກສະເລ່ຍໃຫ້ໄດ້ປະມານ 73 ກິໂລຕໍ່ຄົນຕໍ່ປີ ຫຼື ຮັບປະກັນດ້ານໂພຊະນາການຂອງປະຊາຊົນໃຫ້ໄດ້ຮັບພະລັງງານຈາກຊີ້ນ, ໄຂ່ ແລະ ປາ ບໍ່ຕໍ່າກວ່າ 440 ກິໂລກະລໍລີ/ຄົນ/ວັນ. ພ້ອມນີ້ ຍັງໄດ້ວາງເປົ້າໝາຍການຜະລິດສັດ ແລະ ສັດນໍ້າ ເປັນສິນຄ້າ ໂດຍສະເພາະຜະລິດງົວ ເປັນສິນຄ້າ ເພື່ອສົ່ງອອກ ໃຫ້ໄດ້ 50.000 ໂຕຕໍ່ປີ ຫຼື 250.000 ໂຕ ໃນປີ 2025.

ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການລ້ຽງສັດ ແລະ ການປະມົງ ໃນໄລຍະ 5 ປີຜ່ານມາ (2016-2020) ກໍ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ໃນແຜນພັດທະນາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ໄດ້ສຸມໃສ່ພັດທະນາການລ້ຽງສັດ ແລະ ການປະມົງ ຂອງຊາດ ໂດຍແນ່ໃສ່ວຽກງານ ຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການ, ການຜະລິດສັດ ແລະ ປາ ເປັນສິນຄ້າ ຢ່າງຕໍ່ເນື່ອງ, ເຫັນໄດ້ວ່າ ຂະບວນການລ້ຽງສັດ ແລະ ສັດນໍ້າຂອງຊາວກະສິກອນ ໂດຍລວມແມ່ນມີການຫັນປ່ຽນຈາກການລ້ຽງແບບປະປ່ອຍຕາມທໍາມະຊາດທີ່ໃຫ້ຜົນຜະລິດຕໍ່າ ໄປສູ່ການລ້ຽງແບບມີການຄຸ້ມຄອງ ທີ່ໃຫ້ຜົນຜະລິດດີ ນັບມື້ນັບເພີ່ມຂຶ້ນເປັນລໍາດັບ, ມີການນໍາໃຊ້ແນວພັນສັດທີ່ດີ, ຂະບວນການປູກຫຍ້າແນວພັນດີເພື່ອລ້ຽງສັດ, ການເຮັດກ້ອນແຮ່ທາດ, ອາຫານເສີມ, ການດູແລສຸຂະພາບ ແລະ ສັກຢາກັນພະຍາດສັດ ຂະຫຍາຍຕົວຢ່າງກວ້າງຂວາງ ແລະ ໄປຕາມຈຸດສຸມທີ່ວາງໄວ້ ເຫັນໄດ້ການຂະຫຍາຍຕົວຂອງຝູງສັດ ໃນລະດັບ 5% ຕໍ່ປີ ຫຼື ມີ: ຄວາຍ 1,234 ລ້ານໂຕ ເພີ່ມຂຶ້ນ 1% ຕໍ່ປີ, ງົວຂະຫຍາຍໂຕສະເລ່ຍລະດັບ 3% ຕໍ່ປີ ຫຼື ຈາກ 1,820 ລ້ານໂຕ ໃນປີ 2015 ມາເປັນ 2,188 ລ້ານໂຕ, ໝູຂະຫຍາຍໂຕໃນລະດັບ 5% ຕໍ່ປີ ຈາກ 3,25 ລ້ານໂຕ ມາເປັນ 4,29 ລ້ານໂຕ, ສັດປີກຂະຫຍາຍຕົວໃນລະດັບ 5,86% ຕໍ່ປີ ຈາກ 39 ລ້ານໂຕ ມາເປັນ 41 ລ້ານໂຕ. ໂດຍລວມ ສະຖິຕິຝູງສັດໄດ້ເພີ່ມຂຶ້ນ 24% ເມື່ອທຽບໃສ່ປີ 2015. ວຽກງານປະມົງ ກໍ່ສາມາດສ້າງວັງສະຫງວນເພື່ອອະນຸລັກສັດນໍ້າໄດ້ 885 ແຫ່ງ, ປ່ອຍປາລົງສູ່ແຫຼ່ງນໍ້າຕ່າງໆ ໄດ້ຫຼາຍກວ່າ 150 ລ້ານໂຕ, ຜະລິດລູກປາໄດ້ 300 ລ້ານໂຕຕໍ່ປີ ຫຼື ເພີ່ມຂຶ້ນ 20% ຈາກປີ 2015. ທັງໝົດ ເຮັດໃຫ້ວຽກງານ ການຜະລິດ ແລະ ສະໜອງ ຊີ້ນ, ໄຂ່ ແລະ ປາ ບັນລຸໄດ້ຕາມແຜນການ ທີ່ວາງໄວ້ຄື 487.500 ໂຕນ ໃນປີ 2020, ເຮັດໃຫ້ອັດຕາການບໍລິໂພກຊີ້ນ, ໄຂ່ ແລະ ປາ ສະເລ່ຍບັນລຸ 65 ກິໂລກຣາມ/ຄົນ/ປີ ຫຼື ສາມາດ ເຮັດໃຫ້ປະຊາຊົນ ໄດ້ຮັບພະລັງງານຈາກທາດຊີ້ນ 422 ກິໂລກາລໍລີ /ຄົນ/ມື້ ພຽງພໍຕໍ່ຄວາມຕ້ອງການໂດຍພື້ນຖານ.

ການຫັນຮູບແບບການການລ້ຽງສັດ ແລະ ສັດນໍ້າ ໄປສູ່ການລ້ຽງສັດເປັນຟາມ ຫຼື ເປັນສິນຄ້າ ກໍມີທ່າອ່ຽງຂະຫຍາຍໂຕດີພໍສົມຄວນ ປະຈຸບັນມີຟາມລ້ຽງຄວາຍ 28 ຟາມ ມີຄວາຍ 1.550 ໂຕ, ຟາມລ້ຽງງົວ 387 ຟາມ, ມີ

ງົວ 46.500 ໂຕ, ຟາມລ້ຽງໝູ 442 ຟາມ, ມີແມ່ພັນ 23.200 ແມ່ ສາມາດສະໜອງໝູນ້ອຍໄດ້ 510.400 ໂຕ, ສາມາດສະໜອງໝູຊີ້ນໄດ້ 468.800 ໂຕຕໍ່ປີ, ຟາມລ້ຽງແບ້ ມີ 55 ຟາມ, ມີແບ້ 5.400 ໂຕ, ຟາມລ້ຽງໄກ່ພັນໄຂ່ ມີ 263 ຟາມ, ມີແມ່ໄກ່ໄຂ່ 1.612.400 ໂຕ, ຟາມລ້ຽງໄກ່ພັນຊີ້ນ 123 ຟາມ, ມີພໍ່ແມ່ພັນໄກ່ຊີ້ນ 22.000 ແມ່ ສາມາດສະໜອງໄກ່ນ້ອຍພັນຊີ້ນ ໄດ້ 1.300.000 ໂຕ, ຟາມລ້ຽງເປັດພັນໄຂ່ ແລະ ເປັດພັນຊີ້ນມີ 113 ຟາມ, ມີເປັດທັງໝົດ 227.400 ໂຕ ແລະ ມີຟາມນົກກະທາ 12 ຟາມ, ມີນົກກະທາ 277.300 ໂຕ. ການລ້ຽງສັດນໍ້າເປັນສິນຄ້າກໍມີການຂະຫຍາຍຕົວ ປະຈຸບັນມີ ກະຊັງລ້ຽງປາ 7.300 ກະຊັງ ສາມາດຜະລິດປາໄດ້ 29.200 ໂຕນ ກວມເອົາ 22,46 % ຂອງຜົນຜະລິດປາລ້ຽງທັງໝົດ. ສັງລວມແລ້ວ, ການຜະລິດ ແລະ ສະໜອງ ຊີ້ນ, ໄຂ່ ແລະ ປາ ຈາກການລ້ຽງແບບເປັນຟາມ ປີ 2020 ແມ່ນບັນລຸ 197.600 ໂຕນ ຫຼື ກວມເອົາ 40,5% ຂອງຜົນຜະລິດສັດທັງໝົດຂອງປະເທດ.

ຄຽງຄູ່ກັບການລ້ຽງສັດເພື່ອສະໜອງການຊົມໃຊ້ພາຍໃນແລ້ວກໍຍັງມີການສົ່ງອອກ ຊຶ່ງໃນປີ 2020 ໄດ້ ສົ່ງຄວາຍອອກ 20.000 ໂຕ ແລະ ງົວ 86.000 ໂຕ, ສົ່ງອອກໝູຫຼາຍກວ່າ 38.000 ໂຕ, ສົ່ງແບ້ອອກຫຼາຍກ່ວາ 9.000 ໂຕ ແລະ ສັດປີກຫຼາຍກວ່າ 1.600.000 ໂຕ.

## 2. ທ່າແຮງ

### 2.1 ທ່າແຮງພື້ນຖານ ແລະ ປັດໄຈການຜະລິດ

**ດ້ານພູມອາກາດ:** ສປປ ລາວ ຕັ້ງຢູ່ໃນແຫຼມອິນດູຈີນ ທີ່ມີພູມອາກາດ ເຂດມໍລະສຸມຮ້ອນຊຸ່ມ, ມີລະດູຝົນ 5 ເດືອນ ເລີ່ມແຕ່ ເດືອນ ພຶດສະພາ ຫາ ເດືອນ ຕຸລາ, ລະດູແລ້ງເຢັນ 4 ເດືອນ ເລີ່ມແຕ່ເດືອນ ພະຈິກ ຫາ ເດືອນ ກຸມພາ ແລະ ລະດູແລ້ງຮ້ອນ 2 ເດືອນ ເລີ່ມ ແຕ່ ເດືອນ ມີນາ ຫາ ເດືອນ ເມສາ. ອຸນຫະພູມຕໍ່າສຸດ 5 ອົງສາເຊລເຊັຍສ, ອຸນຫະພູມສູງສຸດ 40 ອົງສາເຊລເຊັຍສ. ປະລິມານນໍ້າຝົນສະເລ່ຍຕໍ່ປີແຕກຕ່າງກັນຢູ່ແຕ່ລະບ່ອນ, ຢູ່ສະຖານີປາກຊ່ອງ ແຂວງຈໍາປາສັກ ສະເລ່ຍ ມີປະມານ 3.700 ມມ, ສະຫວັນນະເຂດ 1.440 ມມ, ວຽງຈັນ 1.700 ມມ ແລະ ຫຼວງພະບາງ ປະມານ 1.360 ມມ ຊຶ່ງນໍ້າຝົນແມ່ນແຫຼ່ງຄວາມຊຸ່ມຊື່ນຕົ້ນຕໍຂອງປະເທດ.

**ດ້ານເນື້ອທີ່:** ສປປ ລາວ ມີເນື້ອທີ່ດິນ ແບ່ງເປັນ ເນື້ອທີ່ປ່າໄມ້. ດິນກະສິກໍາ ແລະ ດິນອື່ນໆ ລວມທັງໝົດມີປະມານ 24.700.000 ຮຕ ໃນນີ້ ເປັນດິນເຮັດນາ ແລະ ຂະຫຍາຍນາໄດ້ ປະມານ 2.000.000 ຮຕ, ດິນປູກພືດໝູນວຽນ 2.000.000 ຮຕ ແລະ ດິນປູກປ່າ ຈໍານວນ 6.000.000 ຮຕ ສ່ວນທີ່ເຫຼືອ 14.000.000 ຮຕ. ແມ່ນດິນປ່າໄມ້ ແລະ ທົ່ງຫຍ້າທໍາມະຊາດ ປະມານ 700.000 ຮຕ ຊຶ່ງເນື້ອທີ່ດິນສ່ວນນີ້ເອງແມ່ນສາມາດພັດທະນາເພື່ອການລ້ຽງສັດໄດ້ຢ່າງພຽງພໍ.

**ດ້ານແຫຼ່ງນໍ້າ:** ສປປ ລາວ ມີທ່າແຮງດ້ານແຫຼ່ງນໍ້າເປັນຈໍານວນຫຼວງຫຼາຍ, ນອກຈາກນໍ້າຝົນແລ້ວ ຍັງມີແມ່ນໍ້າຂອງ ແລະ ສາຂາແມ່ນໍ້າຕ່າງໆ ລວມທັງອ່າງເກັບນໍ້າຂອງເຂື່ອນໄຟຟ້ານໍ້າຕົກ, ຊົນລະປະທານ ແລະ ອື່ນໆ ຊຶ່ງຄາດວ່າທົ່ວປະເທດມີເນື້ອທີ່ແຫຼ່ງນໍ້າຈືດ ປະມານ 1.200.000 ຮຕ ຊຶ່ງຈະສາມາດຮອງຮັບການພັດທະນາການລ້ຽງສັດນໍ້າເປັນສິນຄ້າໄດ້ຢ່າງຫຼວງຫຼາຍ.

**ດ້ານແຮງງານ:** ສປປ ລາວ ມີທ່າແຮງດ້ານແຮງງານກະສິກໍາ ກວມ 61,5% ຂອງແຮງງານລາວທົ່ວປະເທດແຮງງານສ່ວນຫຼາຍ ແມ່ນມີມູນເຊື້ອດຸໝັ່ນ ແລະ ອາໄສຢູ່ເປັນຫົວໜ່ວຍຄອບຄົວ ແລະ ຍັງແມ່ນແຮງງານທີ່ມີຄ່າແຮງຕໍ່າ ຊຶ່ງຈະເປັນຜົນດີໃນດ້ານການຫຼຸດຜ່ອນຕົ້ນທຶນການຜະລິດລົງໄດ້.

ນອກຈາກບັນດາປັດໄຈທີ່ກ່າວມາຂ້າງເທິງແລ້ວ ສປປ ລາວ ຍັງມີພື້ນຖານດ້ານປັດໄຈການຜະລິດຫຼາຍພໍສົມຄວນ ເປັນຕົ້ນ ດ້ານແນວພັນສັດ, ອາຫານສັດ, ຢາກັນ ແລະ ຢາປິ່ນປົວພະຍາດ ແລະ ດ້ານການຈັດການຟາມ.

**ດ້ານແນວພັນ:** ສປປ ລາວ ມີແນວພັນສັດພື້ນເມືອງທີ່ທົນທານຕໍ່ສະພາບແວດລ້ອມ ແລະ ໄດ້ຜ່ານການຄັດເລືອກພັນໂດຍທໍາມະຊາດມາແລ້ວຫຼາຍເຊັ່ນອາຍຸຄົນ ຊຶ່ງໄດ້ສະສົມຄວາມດີເລີດດ້ານກໍາມະພັນໃນການປັບໂຕ ແລະ ຢູ່ລອດໃນສະພາບແວດລ້ອມ ແຫ້ງແລ້ງ, ຄວາມຊຸມຊື່ນສູງ ແລະ ສະພາບອາກາດຮ້ອນ ແລະ ເຢັນໄດ້ດີ ຊຶ່ງຈະເປັນ

ເງື່ອນໄຂອັນດີໃຫ້ແກ່ການພັດທະນາພັນສັດໃໝ່ ທີ່ໃຫ້ທັງຜົນຜະລິດສູງ ແລະ ທົນທານຕໍ່ສະພາບແວດລ້ອມ ແລະ ເປັນທ່າແຮງສໍາລັບການຂະຫຍາຍພັນສັດໃນອະນາຄົດໄດ້.

**ດ້ານອາຫານສັດ:** ເຖິງວ່າ ສປປ ລາວ ຍັງບໍ່ທັນໄດ້ພັດທະນາເທົ່າທີ່ຄວນກໍຕາມ ແຕ່ ກໍມີທ່າແຮງໃນການປູກພືດທີ່ເປັນວັດຖຸດິບອາຫານສັດໄດ້ຢ່າງຫຼວງຫຼາຍ. ໃນທຸກໆປີ ສປປ ລາວ ໄດ້ສົ່ງອອກສາລີອາຫານສັດໃຫ້ແກ່ ໄທ, ຫວຽດນາມ ແລະ ຈີນ ຢ່າງຫຼວງຫຼາຍ ຖ້າເຮົາຫັນປ່ຽນນໍາເອົາວັດຖຸດິບນີ້ມາພັດທະນາເປັນອາຫານສັດຢ່າງເອົາຈິງເອົາຈັງແລ້ວ ເຊື່ອວ່າ ສປປ ລາວ ຈະສາມາດມີອາຫານ ສໍາລັບລ້ຽງສັດໄດ້ຢ່າງພຽງພໍ ແລະ ອີກຢ່າງໜຶ່ງ ຢູ່ໃນເຂດພື້ນທີ່ໂນນ ຫຼື ຄ້ອຍຊັນ ທີ່ບໍ່ເໝາະສໍາລັບການປູກເຂົ້າ ກໍສາມາດປູກຫຍ້າ ແລະ ພືດອາຫານສັດອື່ນໄດ້.

**ຢາກັນ ແລະ ຢາປິ່ນປົວພະຍາດສັດ:** ສປປ ລາວ ມີ ສູນຜະລິດ ແລະ ສະໜອງຢາກັນພະຍາດ ເປັນຂອງລັດ ຊຶ່ງປະຈຸບັນສາມາດຜະລິດຢາກັນພະຍາດສັດທີ່ສໍາຄັນຕົ້ນຕໍໄດ້ຢ່າງພຽງພໍ. ສໍາລັບຢາກັນ ແລະ ຢາປິ່ນປົວ ທີ່ລາວເຮົາຍັງບໍ່ສາມາດຜະລິດໄດ້ນັ້ນ ກໍມີຄວາມສະດວກໃນການນໍາເຂົ້າຈາກຜູ້ຜະລິດຈາກປະເທດໃກ້ຄຽງ. ປະຈຸບັນແມ່ນກໍາລັງມີການປັບປຸງລະບົບການກວດກາ ແລະ ຂຶ້ນທະບຽນຢາ ເພື່ອຍົກລະດັບຄຸນນະພາບຂອງຢາໃຫ້ສູງຂຶ້ນ ພ້ອມນີ້ ຕາໜ່າງການສະໜອງຢາກໍໄດ້ຂະຫຍາຍໃຫ້ກວ້າງອອກ ປະຈຸບັນກໍມີຢູ່ເກືອບທຸກເມືອງແລ້ວ.

**ດ້ານການຈັດການຟາມ:** ສປປ ລາວ ມີຄວາມສະດວກໃນການ ນໍາເອົາເຕັກນິກ ທີ່ທັນສະໄໝເຂົ້າມານໍາໃຊ້ໃນການຈັດການຟາມ ຈາກປະເທດອ້ອມຂ້າງຊຶ່ງລ້ວນແຕ່ມີບົດຮຽນ ແລະ ປະສົບການມາແລ້ວ. ອີກດ້ານໜຶ່ງ ສປປ ລາວ ແມ່ນມີສາຍພົວພັນຮ່ວມມືທີ່ດີ ກັບທຸກປະເທດ ແລະ ອົງການຈັດຕັ້ງສາກົນຕະຫຼອດມາ.

### 2.2 ທ່າແຮງດ້ານຕະຫຼາດສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ

ຕະຫຼາດສັດມີຊີວິດ, ຊີ້ນສັດ ແລະ ປາ ຂອງ ສປປ ລາວ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຄວາມຕ້ອງການບໍລິໂພກຊີ້ນຢູ່ພາຍໃນປະເທດຍັງມີລະດັບສູງ ຍ້ອນວ່າ ສປປ ລາວ ເປັນປະເທດໜຶ່ງທີ່ມີອັດຕາການຂະຫຍາຍຕົວທາງດ້ານເສດຖະກິດສູງສົມຄວນ, ປະຊາຊົນໃນປະເທດຈະມີລາຍຮັບສູງຂຶ້ນຢ່າງຕໍ່ເນື່ອງ ແນ່ນອນວ່າຈະມີການບໍລິໂພກຊີ້ນສັດເພີ່ມຂຶ້ນ. ກ່ຽວກັບລາຄາຊີ້ນສັດ ແລະ ປາ ເວົ້າລວມ ແມ່ນມີລາຄາດີກວ່າລາຄາພືດກະສິກໍາອື່ນ.

ຕະຫຼາດຊີ້ນພາຍໃນ ສໍາລັບສະໜອງໃຫ້ແກ່ນັກທ່ອງທ່ຽວ ແລະ ພະນັກງານທີ່ສັງກັດຢູ່ອົງການຈັດຕັ້ງກໍມີນັບມື້ນັບເພີ່ມຂຶ້ນ. ນອກຈາກນີ້, ຊີ້ນສັດຂອງລາວຍັງມີຄວາມອາດສາມາດພັດທະນາເປັນຊີ້ນສັດອິນຊີ ຫຼື ພັດທະນາໃຫ້ເປັນຍີ່ຫໍ້ ທີ່ເປັນເອກະລັກຂອງລາວ ຊຶ່ງເໝາະສົມກັບການເປີດຕະຫຼາດໃຫ້ນັກທ່ອງທ່ຽວ ແລະ ຜູ້ສະແຫວງຫາກິນອາຫານພື້ນບ້ານແບບແປກໃໝ່ໄດ້.

ເຖິງຢ່າງໃດກໍຕາມ ການເຂົ້າເຖິງຕະຫຼາດຂອງປະເທດເພື່ອນບ້ານ ແລະ ສາກົນ ຍັງມີຄວາມຫຍຸ້ງຍາກ ເນື່ອງຈາກ ຜົນຂອງການຜະລິດສັດ ແລະ ສັດນໍ້າ ຍັງມີປະລິມານຈໍາກັດ ແລະ ບາງຜະລິດຕະພັນ ກໍຍັງບໍ່ທັນໄດ້ມາດຕະຖານຂອງຕະຫຼາດຂອງປະເທດຄູ່ຄ້າ. ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງໄດ້ ປັບປຸງລະບົບການຜະລິດ ແລະ ປຸງແຕ່ງ ສັດ ແລະ ສັດນໍ້າ ໃຫ້ໄດ້ມາດຕະຖານ ພ້ອມທັງເຈລະຈາເປີດຕະຫຼາດກັບປະເທດຄູ່ຄ້າ ໃຫ້ໄດ້ຫຼາຍຂຶ້ນ.

### 2.3 ທ່າແຮງດ້ານນະໂຍບາຍຂອງລັດໃນການສົ່ງເສີມການລົງທຶນ

ສປປ ລາວ ໄດ້ຮັບສິດທິພິເສດດ້ານພາສີອາກອນ ໃນຖານະປະເທດພັດທະນາໜ້ອຍທີ່ສຸດ ນໍາຫຼາຍກອບ ແລະ ຫຼາຍປະເທດ. ນອກຈາກສິດທິພິເສດຂ້າງເທິງແລ້ວ ສປປ ລາວ ຍັງມີກົດໝາຍສົ່ງເສີມການລົງທຶນ ສໍາລັບຊຸກຍູ້ສົ່ງເສີມທຸລະກິດກະສິກໍາ ລວມທັງທຸລະກິດການລ້ຽງສັດ ແລະ ສັດນໍ້າ ອີກ.

ລັດຖະບານ ສປປ ລາວ ໄດ້ມີຄວາມພະຍາຍາມດໍາເນີນນະໂຍບາຍສົ່ງເສີມ ເພື່ອເປີດກວ້າງໃຫ້ຊາວກະສິກອນໄດ້ເຂົ້າເຖິງແຫຼ່ງເງິນກູ້ສໍາລັບລ້ຽງສັດດ້ວຍຫຼາຍວິທີ ເປັນຕົ້ນແມ່ນມີກອງທຶນເພື່ອຜູ້ຜະລິດຂະໜາດກາງ ແລະ ຂະໜາດນ້ອຍ. ກົດໝາຍດ້ານ ທຸລະກິດ ແລະ ການເງິນ ຫຼາຍກົດໝາຍ ກໍໄດ້ກໍານົດໃຫ້ມີນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນພາສີອາກອນ ໃຫ້ແກ່ການນໍາເຂົ້າປັດໃຈການຜະລິດສໍາລັບການລ້ຽງສັດ ແລະ ສັດນໍ້າ.

### 2.4 ທ່າແຮງພື້ນຖານໂຄງລ່າງ ຄົມມະນາຄົມ

ສປປ ລາວ ມີເສັ້ນທາງທະລຸໂລ່ງ ແຕ່ເໜືອຫາໃຕ້ ແຕ່ຕາເວັນອອກຫາຕາເວັນຕົກ ແຕ່ໃນເມືອງໄປຫາຊົນນະບົດ ແລະ ເປີດເສັ້ນທາງລົດໄຟຄວາມໄວສູງ, ສະໜາມການບິນ ແລະ ການຄົມມະນາຄົມຕ່າງໆ ຕິດຕໍ່ຈາກພາຍໃນໄປສູ່ຕ່າງປະເທດໄດ້ຫຼາກຫຼາຍເສັ້ນທາງ ຊຶ່ງໄດ້ສ້າງເງື່ອນໄຂສະດວກໃຫ້ແກ່ການສະໜອງປັດໃຈການຜະລິດ ແລະ ຂົນສິ່ງຜະລິດຕະພັນສັດໄດ້ຢ່າງວ່ອງໄວຫຼາຍຂຶ້ນ. ປະຈຸບັນ ສປປ ລາວ ມີການບໍລິການສົ່ງເສີມດ້ານວິຊາການທີ່ວ່ອງໄວເຊື່ອຖືໄດ້ເພີ່ມຂຶ້ນ, ມີພື້ນຖານວັດຖຸເຕັກນິກໃນດ້ານການກວດກາວິໄຈພະຍາດ ແລະ ຜະລິດຕະພັນສັດ, ອາຫານສັດ; ມີລະບົບເຝົ້າລະວັງ, ກັນ ແລະ ຄວບຄຸມ ພະຍາດສັດ ແຕ່ສູນກາງລົງຮອດທ້ອງຖິ່ນຢ່າງທົ່ວເຖິງນັບມື້ນັບໄດ້ຮັບການພັດທະນາເປັນລຳດັບ.

### 2.5 ລະບຽບຄຸ້ມຄອງ ແລະ ມາດຕະການດ້ານວິຊາການ

ສປປ ລາວ ມີກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ, ດຳລັດ, ນິຕິກຳລຸ່ມກົດໝາຍ ເກືອບຄົບຖ້ວນ ຊຶ່ງໄດ້ເປັນເຄື່ອງມືທີ່ດີໃຫ້ແກ່ການຄຸ້ມຄອງ, ກວດກາ ແລະ ສະໜັບສະໜູນ ພາກຜູ້ປະກອບການໃນການດຳເນີນທຸລະກິດຢ່າງເປັນທຳ. ການບໍລິການສົ່ງເສີມດ້ານວິຊາການກໍຖືກປັບປຸງໃຫ້ວ່ອງໄວທັນສະໄໝຂຶ້ນ. ປະຈຸບັນພວກເຮົາມີພື້ນຖານວັດຖຸເຕັກນິກໃນດ້ານການກວດກາວິໄຈພະຍາດ ແລະ ຜະລິດຕະພັນສັດ, ອາຫານສັດ; ມີລະບົບເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດສັດແຕ່ສູນກາງລົງຮອດທ້ອງຖິ່ນ. ຕາໜ່າງສັດຕະວະແພດບ້ານທີ່ມີຢູ່ແຕ່ລະທ້ອງຖິ່ນ ກໍໄດ້ຮັບການຝຶກອົບຮົມ ແລະ ພັດທະນາເປັນລຳດັບ.

## 3. ບັນຫາ

ເຖິງວ່າ ການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ ຈະມີການຂະຫຍາຍຕົວດີພໍສົມຄວນກໍຕາມ ແຕ່ກໍຍັງພົບກັບອຸປະສັກ ໃນຫຼາຍໆດ້ານທີ່ເປັນຂໍ້ຈຳກັດ ເຊັ່ນ:

### 3.1 ບັນຫາລວມ

1) ຊີ້ນສັດ ແລະ ສັດນ້ຳ ບໍ່ພຽງພໍກັບການບໍລິໂພກພາຍໃນຢ່າງໝັ້ນຄົງ ຍ້ອນສະພາບການຫັນປ່ຽນຈາກລະບົບການຜະລິດແບບພໍກຸ້ມກິນ ໄປສູ່ລະບົບການຜະລິດເປັນສິນຄ້າ ບໍ່ທັນເຮັດໄດ້ຢ່າງໜັກແໜ້ນ ແລະ ທັນການ;
2) ຂາດການຮ່ວມມືລະຫວ່າງພາກລັດ ແລະ ທຸລະກິດໃນການກຳນົດນະໂຍບາຍເພື່ອພັດທະນາການລ້ຽງສັດ ແລະ ສັດນ້ຳ ຢ່າງຄົບຊຸດ ແລະ ຮອບດ້ານ ທີ່ສາມາດເຊື່ອມສານເປັນອັນດຽວກັນລະຫວ່າງການຄຸ້ມຄອງ, ການວາງແຜນຄວາມຕ້ອງການ ແລະ ສົ່ງເສີມການຜະລິດ ແລະ ຈຳໜ່າຍຢ່າງກົມກຽວ;
3) ມາດຕະການແກ້ໄຂບັນຫາກ່ຽວກັບທີ່ດິນ ລ້ຽງສັດ ແລະ ສັດນ້ຳ ຍັງບໍ່ຊັດເຈນ;
4) ນັກວິຊາຊີບດ້ານສັດຕະວະແພດ ແລະ ປະມົງ ໃນຂັ້ນສູນກາງ ແລະ ທ້ອງຖິ່ນຍັງຂາດເຂີນ ທັງທາງດ້ານປະລິມານ ແລະ ຄຸນນະພາບ. ນັກສົ່ງເສີມດ້ານການລ້ຽງສັດ ແລະ ສັດນ້ຳ ຍັງຂາດຄຸນນະພາບ ແລະ ມີຄວາມຊຳນານຕ່ຳ;
5) ການກວດກາ ແລະ ຢັ້ງຢືນດ້ານສຸຂານາໄມ ຍັງເຮັດໄດ້ບໍ່ທັນດີເທົ່າທີ່ຄວນ.

### 3.2 ບັນຫາຂອງຊາວກະສິກອນ ແລະ ຜູ້ປະກອບການ

1) ຂາດເງິນທຶນ ເພາະບໍ່ມີແຫຼ່ງເງິນກູ້ໄລຍະຍາວ ດອກເບ້ຍເໝາະສົມ ຈຶ່ງບໍ່ສາມາດຂະຫຍາຍການຜະລິດໃຫ້ກວ້າງຂວາງ ຫຼື ເອົາການລ້ຽງສັດເປັນອາຊີບໄດ້;
2) ການຈັດຕັ້ງກຸ່ມ ຫຼື ສະຫະກອນ ຍັງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ ຜູ້ຜະລິດຈຶ່ງບໍ່ສາມາດຕໍ່ລອງກັບພາກການຄ້າ ຫຼື ເຂົ້າເຖິງນະໂຍບາຍຈາກພາກລັດໄດ້ຢ່າງເຕັມສ່ວນໄດ້;

3) ຊາວກະສິກອນຜູ້ລ້ຽງສັດ ສ່ວນໃຫຍ່ມີລະດັບການສຶກສາຕໍ່າ ຂາດຄວາມຮູ້ ຄວາມເຂົ້າໃຈ ດ້ານເຕັກນິກ ແລະ ການບໍລິຫານຈັດການວິສາຫະກິດ ລວມທັງການບໍລິຫານຊັບພະຍາກອນ ແລະ ຄວາມສ່ຽງຢ່າງຍືນຍົງ ແລະ ມີປະສິດທິພາບໄດ້.

### 3.3 ບັນຫາດ້ານປັດໄຈການຜະລິດ

1) ແນວພັນສັດ ບໍ່ທັນໄດ້ພັດທະນາຢ່າງຄົບຊຸດ, ພໍ່ແມ່ພັນ, ນ້ຳເຊື້ອ, ລູກສັດພັນດີ ຍັງບໍ່ພຽງພໍກັບຄວາມຕ້ອງການ, ແນວພັນທີ່ມີຢູ່ກໍຍັງບໍ່ໄດ້ພັດທະນາ, ການປັບປຸງພັນສັດບໍ່ທັນເປັນລະບົບທີ່ໝັ້ນຄົງ, ການຄວບຄຸມການນຳໃຊ້ແນວພັນສັດຍັງຂາດການວາງແຜນ, ຍັງມີການຂ້າສັດຖືພາມານ ແລະ ບໍລິໂພກສັດທີ່ມີໄວອາຍຸກຳລັງເຕີບໂຕ;

2) ແຫຼ່ງສະໜອງແນວພັນທີ່ມີຄຸນນະພາບດີ ເຊື່ອຖືໄດ້ ລາຄາສົມເຫດສົມຜົນ ແລະ ຮັບປະກັນການສະໜອງຢ່າງທ່ວງທັນກັບເວລາ ແລະ ຄວາມຕ້ອງການຍັງຈຳກັດ ມີຢູ່ແຕ່ໃນເຂດຕົວເມືອງ ແຕ່ໃນຊົນນະບົດ ຍັງຊອກຫາພັນສັດໄດ້ຍາກ;

3) ການສະໜອງອາຫານສັດ ເຂັ້ມຂຸ້ນ ແລະ ສຳເລັດຮູບທີ່ມີຄຸນນະພາບດີ ຍັງບໍ່ທັນຮັບປະກັນ ຍັງນຳເຂົ້າຈາກຕ່າງປະເທດເປັນສ່ວນຫຼາຍ. ລາຄາອາຫານສັດຍັງສູງ ຊຶ່ງບໍ່ທັນສາມາດແຂ່ງຂັນດ້ານລາຄາ ແລະ ຄຸນນະພາບກັບສິນຄ້າພາຍນອກໄດ້;

4) ອາຫານຫຍາບສຳລັບສັດຄ້ຽວເອື້ອງເຖິງແມ່ນວ່າມີສ່ວນຫຼາຍ ແຕ່ກໍຍັງແມ່ນຫຍ້າທຳມະຊາດ ຊຶ່ງໃຫ້ຜົນຜະລິດ ແລະ ຄຸນນະພາບຕ່ຳ, ພ້ອມດຽວກັນນີ້ ເນື້ອທີ່ງເຄີຍເປັນແຫຼ່ງສະໜອງອາຫານຫຍາບກໍນັບມື້ນັບຫຼຸດລົງຍ້ອນການນຳໃຊ້ໄປປູກພືດເສດຖະກິດອື່ນ ຫຼື ບຸກເບີກເຮັດກິດຈະການອື່ນເພີ່ມຂຶ້ນ. ສະພາບການຂາດແຄນອາຫານໃນຊ່ວງລະດູແລ້ງນັບມື້ນັບສູງຂຶ້ນ. ນອກຈາກນັ້ນ ການປຸງແຕ່ງ ແລະ ນຳໃຊ້ອາຫານຂຸ້ນ ແລະ ອາຫານເສີມສຳລັບການທອມສັດຄ້ຽວເອື້ອງກໍຍັງບໍ່ທັນປະຕິບັດຢ່າງກວ້າງຂວາງ;

5) ຍັງມີການເກີດພະຍາດລະບາດສັດ ແລະ ອັດຕາການຕາຍຂອງສັດນ້ອຍຍັງສູງ;

6) ຍັງຂາດເຂີນຢາກັນພະຍາດສັດທີ່ຈຳເປັນບາງຊະນິດ ແລະ ຢາທີ່ຜະລິດໄດ້ ກໍຍັງມີຄຸນນະພາບ ແລະ ມາດຕະຖານບໍ່ສູງ, ໂຮງງານຜະລິດຢາກັນພະຍາດສັດທີ່ມີປະຈຸບັນ ກໍບໍ່ທັນໄດ້ມາດຕະຖານສາກົນ;

7) ສະພາບລວມຂອງຟາມ ແລະ ຄອກສັດ ຂອງຊາວກະສິກອນ ກໍຍັງເປັນແບບປະຖົມປະຖານ, ຟາມລ້ຽງສັດສ່ວນຫຼາຍບໍ່ໄດ້ມີມາດຕະຖານຄວາມປອດໄພດ້ານຊີວະພາບ ແລະ ການຈັດການຟາມລ້ຽງສັດທີ່ດີ;

8) ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຍັງປະຖົມປະຖານ, ຂາດການກວດກາອະນາໄມຜະລິດຕະພັນສັດທີ່ໄດ້ມາດຕະຖານ.

### 3.4 ບັນຫາດ້ານການຕະຫຼາດ ແລະ ລາຄາ

1) ກົນໄກການຄຸ້ມຄອງຕະຫຼາດ ແລະ ລາຄາສັດ ແລະ ສັດນ້ຳ ຢູ່ພາຍໃນ ຍັງບໍ່ທັນດີ ແລະ ແທດເໝາະກັບຄວາມເປັນຈິງ;

2) ຂາດນະໂຍບາຍສົ່ງເສີມການຂາຍຊີ້ນສັດທີ່ສະອາດປອດໄພ ເພື່ອສ້າງລາຄາທີ່ຄຸ້ມຄ່າ ຕາມຄຸນນະພາບຂອງຜະລິດຕະພັນຢ່າງເອົາຈິງເອົາຈັງ ຈຶ່ງເປັນສາເຫດໜຶ່ງ ທີ່ເປັນຂໍ້ຈຳກັດໃຫ້ແກ່ການຍົກລະດັບການຜະລິດຊີ້ນ ແລະ ປາ ຂອງ ສປປ ລາວໃຫ້ສາມາດແຂ່ງຂັນກັບສິນຄ້າຕ່າງປະເທດໄດ້;

3) ຂາດນະໂຍບາຍ ຮັບປະກັນຄວາມສ່ຽງການລົງທຶນ, ການຄ້ຳປະກັນ ຫຼື ແຊກແຊງລາຄາໃຫ້ຜູ້ຜະລິດຢູ່ໄດ້ຢ່າງຍືນຍົງ;

4) ຂໍ້ມູນຂ່າວສານ ການພະຍາກອນດ້ານການຕະຫຼາດຂາດຄວາມເປັນທັນສະໄໝ. ການສຶກສາ, ຕິດຕາມໂຄງສ້າງຕົ້ນທຶນການຕະຫລາດ ແລະ ຄຸ້ມຄອງລາຄາ ຍັງບໍ່ທັນໄດ້ພັດທະນາເທົ່າທີ່ຄວນ;
5) ການເຈລະຈາເປີດຕະຫຼາດສົ່ງອອກຍັງເຮັດໄດ້ໜ້ອຍ ກົງກັນຂ້າມ ຊີ້ນສັດ ແລະ ສັດນໍ້າ ຈາກພາຍນອກເຂົ້າສູ່ຕະຫຼາດພາຍໃນປະເທດ ຍັງບໍ່ສາມາດຄຸ້ມຄອງໄດ້ດີ;
6) ການປະຕິບັດມາດຕະການດ້ານສຸຂານາໄມ ແລະ ມາດຕະຖານດ້ານເຕັກນິກ ເປັນຕົ້ນ ການສ້າງເຂດປອດພະຍາດສັດ, ການກັນ ແລະ ຄວບຄຸມພະຍາດສັດ, ລະບົບກວດສອບຄືນຫຼັງ ແລະ ການວິໄຈພະຍາດສັດ ລວມທັງ ການຢັ້ງຢືນສຸຂະພາບສັດ ແລະ ຄຸນນະພາບຜະລິດຕະພັນສັດ ແລະ ສັດນໍ້າ ຍັງບໍ່ທັນເຮັດໄດ້ດີເທົ່າຄວນ.

## 4. ກາລະໂອກາດ ຂອງ ສປປ ລາວ

ເຖິງວ່າ ສປປ ລາວ ຈະມີບັນຫາ ແລະ ຂໍ້ຈຳກັດດັ່ງທີ່ກ່າວມານັ້ນກໍຕາມ ແຕ່ກໍຍັງມີກາລະໂອກາດໃນການພັດທະນາການລ້ຽງສັດ ແລະ ສັດນໍ້າໃຫ້ເປັນສິນຄ້າໄດ້ສູງເຊັ່ນ:

1) ຕະຫຼາດ ແລະ ຄວາມຕ້ອງການຊີ້ນສັດຢູ່ພາຍໃນປະເທດ ແລະ ປະເທດໃກ້ຄຽງ ຍັງມີສູງ;
2) ລາຄາສັດ ແລະ ຜະລິດຕະພັນສັດ ຄາດວ່າຈະເພີ່ມຂຶ້ນອີກ ຍ້ອນການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ ແລະ ປະເທດໃກ້ຄຽງ ໂດຍສະເພາະ ແມ່ນ ສສ ຫວຽດນາມ ແລະ ສປ ຈີນ, ຈຶ່ງເປັນໂອກາດດີ ເພື່ອຈູງໃຈໃຫ້ແກ່ຊາວກະສິກອນຫັນມາລ້ຽງສັດ ແລະ ສັດນໍ້າເພີ່ມຂຶ້ນ;
3) ນະໂຍບາຍທາງຜ່ານ ສ້າງ ສປປ ລາວ ໃຫ້ເປັນຈຸດເຊື່ອມໂຍງ ເຊື່ອມຕໍ່ທາງດ້ານການຄ້າ, ການລົງທຶນ ແລະທ່ອງທ່ຽວ ເປັນໂອກາດທີ່ດີໃຫ້ແກ່ການສ້າງຖານການຜະລິດອາຫານຂອງປະເທດເຮົາ;
4) ການເປີດເສັ້ນທາງລົດໄຟ ແລະ ການຮ່ວມມືໃນຫຼາຍໆ ຂອບເຂດການຄ້າເສລີ ຈະເປັນໂອກາດອັນດີໃຫ້ແກ່ລາວໃນການເປີດກວ້າງການຜະລິດ ແລະ ຕະຫຼາດສັດຂອງ ສປປ ລາວໃຫ້ກວ້າງອອກ;
5) ລັດຖະບານໃຫ້ຄວາມສຳຄັນ ແລະ ມີຄວາມມຸ່ງໝັ້ນ ໃຫ້ມີນະໂຍບາຍສົ່ງເສີມການລ້ຽງສັດເປັນສິນຄ້າຢ່າງເອົາຈິງເອົາຈັງ ຊຶ່ງຈະເປັນໂອກາດທີ່ດີໃຫ້ແກ່ການກະຕຸ້ນການຜະລິດສັດຂອງປະເທດໃຫ້ມີການຂະຫຍາຍຕົວສູງຂຶ້ນ;
6) ການປັບປຸງ ຍົກລະດັບ ຄຸນນະພາບ ໃນການນຳໃຊ້ມາດຕະການ ສຸຂານາໄມ ແລະ ສຸຂານາໄມພືດໃຫ້ສູງຂຶ້ນ ຈະເປັນໂອກາດ ໃຫ້ມີການຕື່ນຕົວຍົກລະດັບຄຸນນະພາບສິນຄ້າຂອງ ສປປ ລາວ ໃຫ້ສູງຂຶ້ນ ແລະໃຫ້ສາມາດເຂົ້າເຖິງຕະຫຼາດຕ່າງປະເທດໄດ້ຫຼາຍຂຶ້ນ.

## 5. ສິ່ງທ້າທາຍ

ສປປ ລາວ ຍັງຈະປະເຊີນກັບສິ່ງທ້າທາຍ ແລະ ໄພຂົ່ມຂູ່ ຈຳນວນໜຶ່ງທີ່ຈະຕ້ອງໄດ້ຕິດຕາມ ແລະ ຄວບຄຸມເຊັ່ນ:

1) ການຜັນຜວນຂອງລາຄານໍ້າມັນ, ລາຄາວັດຖຸດິບອາຫານສັດໃນຕະຫຼາດ ເປັນຕົ້ນແມ່ນສາລີ ແລະ ກາກຖົ່ວເຫຼືອງ ມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງ ຍ້ອນສະພາບການປ່ຽນແປງດິນຟ້າອາກາດ. ແຕ່ກົງກັນຂ້າມລາຄາຂາຍສັດຢູ່ໜ້າຟາມ ຖ້າບໍ່ມີການຄຸ້ມຄອງທີ່ດີ ມັກຈະຫຼຸດລົງ ຫຼື ເຮັດໃຫ້ຊາວກະສິກອນຂາດທຶນແລະ ຢຸດເຊົາກິດຈະການລ້ຽງສັດ ແລະ ຫັນໄປເຮັດອາຊີບອື່ນ;
2) ການຂະຫຍາຍການລ້ຽງສັດ ແລະ ສັດນໍ້າ ແມ່ນ ກິດຈະການທີ່ຫຍຸ້ງຍາກ ສັບສົນ ຊຶ່ງຕ້ອງການຊັບພະຍາກອນບຸກຄົນທີ່ມີຄວາມຊຳນານງານ, ຕ້ອງມີອຸປະກອນ, ພາຫານະທີ່ທັນສະໄໝ ແລະ ຮຽກຮ້ອງໃຫ້ການຈັດຕັ້ງຄຸ້ມຄອງທີ່ໄດ້ມາດຕະຖານອັນແນ່ນອນພໍສົມຄວນ ຈຶ່ງເປັນໄປໄດ້ ແຕ່ກົງກັນຂ້າມ ຊາວກະສິກອນຂອງ ສປປ ລາວ ສ່ວນໃຫຍ່ຍັງເປັນຊາວກະສິກອນແບບດັ້ງເດີມ;

3) ໄພພິບັດທາງທຳມະຊາດ ແລະ ພະຍາດລະບາດສັດກໍຍັງແມ່ນສິ່ງທ້າທາຍ ຂອງ ສປປ ລາວ;

4) ການພັດທະນາຕ່ອງໂສ້ການລ້ຽງສັດ ຕ້ອງໄດ້ເຮັດຢ່າງຄົບຊຸດ ສປປ ລາວ ເວົ້າລວມ ທັງພາກລັດ ແລະ ເອກະຊົນ ຍັງຂາດເຂີນເງິນລົງທຶນ;

5) ການເປີດຕະຫຼາດ ທຶນ ແຮງງານ ແລະ ເຕັກໂນໂລຊີ ຈາກການເຂົ້າຮ່ວມ ກຸ່ມການຄ້າເສລີ ຍັງມີສິ່ງທ້າທາຍ ຍ້ອນວ່າຖ້າຫາກ ສປປ ລາວ ບໍ່ສາມາດແຂ່ງຂັນກັບພາຍນອກໄດ້ ກໍຈະມີຄວາມສ່ຽງກາຍເປັນຕະຫຼາດ ສິນຄ້າຂອງປະເທດອື່ນໄດ້ຢ່າງງ່າຍດາຍ.

ຈາກຜົນຂອງການວິເຄາະ ສະພາບ, ທ່າແຮງ, ບັນຫາ, ກາລະໂອກາດ ແລະ ສິ່ງທ້າທາຍທີ່ໄດ້ກ່າວມາຂ້າງເທິງນັ້ນ ຈຶ່ງເຫັນວ່າ ເຖິງເວລາແລ້ວ ທີ່ ສປປ ລາວ ຈະຕ້ອງມີນະໂຍບາຍແຫ່ງຊາດໃນການສົ່ງເສີມການລ້ຽງສັດ ແລະ ສັດນໍ້າເປັນສິນຄ້າເປັນຂອງປະເທດຢ່າງເປັນຮູບປະທໍາ ແລະ ຮອບດ້ານ ທັງນີ້ກໍເພື່ອໃຊ້ເປັນບ່ອນອີງໃຫ້ແກ່ການຕັດສິນໃຈໃສ່ການລົງທຶນຢ່າງມີຈຸດສຸມ, ປ້ອງກັນຄວາມສ່ຽງ ແລະ ຮັບປະກັນປະສິດທິພາບ ແລະ ຄວາມຍືນຍົງ ເພື່ອພັດທະນາຂະແໜງການລ້ຽງສັດ ແລະ ສັດນໍ້າ ຂອງປະເທດໃຫ້ຈະເລີນກ້າວໜ້າ ຊຶ່ງຈະນໍາໄປສູ່ການສ້າງປະໂຫຍດສູງສຸດໃຫ້ແກ່ປະເທດຊາດ ແລະ ປະຊາຊົນຂອງພວກເຮົາຢ່າງບໍ່ຢຸດຢັ້ງ.

# ພາກທີ II
# ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດການນໍາໃຊ້

## 1. ຈຸດປະສົງ

ນະໂຍບາຍສະບັບນີ້ ກຳນົດ ແນວທາງຂອງພາກລັດ ເພື່ອອຳນວຍຄວາມສະດວກ, ສະໜັບສະໜູນ ການພັດທະນາ ການລ້ຽງສັດ ແລະ ສັດນໍ້າ ຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແນໃສ່ ຮັບປະກັນການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງພໍ, ປອດໄພ, ມີໂພຊະນາການ ແລະ ເປັນສິນຄ້າສົ່ງອອກ ຕາມທິດມີຄຸນນະພາບ, ມີຈຸດສຸມ, ສະອາດ, ສີຂຽວ ແລະ ຍືນຍົງ ໂດຍໄດ້ວາງເປົ້າໝາຍ ໄວ້ດັ່ງນີ້:

## 2. ເປົ້າໝາຍ

ນະໂຍບາຍສະບັບນີ້ ໄດ້ກຳນົດເປົ້າໝາຍ ຜົນທີ່ຈະໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງ ແວດລ້ອມ ດັ່ງນີ້:

### 2.1 ເປົ້າໝາຍທາງດ້ານເສດຖະກິດ

ຄາດວ່າ ແຕ່ນີ້ ຫາ ປີ 2030 ສປປ ລາວ ຈະເພີ່ມການຜະລິດງົວໄດ້ ປະມານ 50.000 ໂຕ/ ປີ, ໝູ 264.000 ໂຕ/ປີ (ຫຼື 22.440 ໂຕນ/ປີ), ແບ້ 20.000 ໂຕ/ປີ, ໄກ່ຊີ້ນ 7.562 ໂຕນ/ປີ, ໄຂ່ 31.450 ໂຕນ/ປີ ແລະ ປາຊີ້ນ 22.500 ໂຕນ/ປີ ລວມມູນຄ່າຜະລິດຕະພັນສັດ ແລະ ສັດນໍ້າ ປະມານ 2.697 ຕື້ກີບ/ປີ. ນອກຈາກນັ້ນ ປະຊາຊົນຍັງຈະມີລາຍຮັບຈາກການສະໜອງພືດອາຫານສັດ ເປັນຕົ້ນ ສາລີ, ມັນຕົ້ນ ແລະ ຫຍ້າລ້ຽງສັດ ລວມທັງ ປຸ໋ຍຊີວະພາບທີ່ໄດ້ຈາກສັດລ້ຽງ ຄາດວ່າ ຈະມີມູນຄ່າ ປະມານ 330 ຕື້ກີບ/ປີ.

### 2.2 ເປົ້າໝາຍທາງດ້ານສັງຄົມ

ນະໂຍບາຍສະບັບນີ້ ຄາດວ່າ ຈະມີຜົນປະໂຫຍດທາງດ້ານສັງຄົມ ດັ່ງນີ້:

1) ສ້າງງານ ສ້າງອາຊີບ ໃຫ້ແກ່ຊາວກະສິກອນ, ກຳມະກອນ ແລະ ຜູ້ປະກອບການ ໃຫ້ມີລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ທີ່ດີຂຶ້ນ, ຫຼຸດຜ່ອນການຫຼັ່ງໄຫຼເຂົ້າມາເຮັດວຽກຢູ່ໃນຕົວເມືອງຂອງຊາວໜຸ່ມ;

2) ຍົກລະດັບສີມືແຮງງານ, ສ້າງຄວາມຊໍານານງານໃນການຄຸ້ມຄອງ, ບໍລິຫານ ແລະ ບໍລິການ ກິດຈະການ ດ້ານການລ້ຽງສັດ ແລະ ສັດນໍ້າ ສູງຂຶ້ນ;

3) ປະຊາຊົນຢູ່ດີ ກິນດີ ມີລາຍໄດ້, ສັງຄົມ ໄດ້ຮັບອາຫານພຽງພໍ ມີຄວາມສະຫງົບ ອຸ່ນອ່ຽງທຸ່ນທ່ຽງ ປະເທດຊາດມີຄວາມໝັ້ນຄົງ, ຈະເລີນສີວິໄລເພີ່ມຂຶ້ນ;

4) ການຈັດຕັ້ງ ແລະ ຄຸ້ມຄອງວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ຂອງ ສປປ ລາວ ຈະໄດ້ຮັບການພັດທະນາ, ຍົກສູງປະສິດທິພາບ ແລະ ປະສິດທິຜົນ ຂອງ ວຽກງານ ສູງຂຶ້ນ.

### 2.3 ເປົ້າໝາຍທາງດ້ານສິ່ງແວດລ້ອມ

ນອກຈາກຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມແລ້ວ ນະໂຍບາຍສະບັບນີ້ ຈະເປັນການປະກອບສ່ວນເຂົ້າໃນການ ສົ່ງເສີມດ້ານສິ່ງແວດລ້ອມ ເປັນຕົ້ນ ແມ່ນການສະໜອງຝຸ່ນຊີວະພາບໃຫ້ແກ່ການປັບປຸງດິນປູກພືດ ແລະ ປະກອບສ່ວນເຂົ້າໃນການຜະລິດພະລັງງານທົດແທນ (ແກັສຊີວະພາບ) ລວມທັງການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວໄດ້ອີກດ້ວຍ ຄາດວ່າ ຈະມີຝຸ່ນຊີວະພາບ ເພື່ອປັບປຸງຄຸນນະພາບດິນປູກພືດ ໄດ້ຫຼາຍກວ່າ 72.000 ໂຕນ ຕໍ່ປີ ຊຶ່ງສາມາດນໍາໄປບໍາລຸງຕົ້ນພືດ ຫຼື ເຮັດກະສິກໍາອິນຊີ ໄດ້ຫຼາຍກວ່າ 8.000 ເຮັກຕາຕໍ່ປີ.

## 3. ຂອບເຂດການນໍາໃຊ້

ນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນໍ້າ ສ້າງຂຶ້ນມາເພື່ອໃຊ້ສໍາລັບ ບຸກຄົນ, ກຸ່ມ, ສະຫະກອນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ປະກອບການກ່ຽວກັບ ການລ້ຽງສັດ ແລະ ສັດນໍ້າແບບເປັນຟາມ ທີ່ໄດ້ຮັບການຢັ້ງຢືນ ແລະ ຮັບຮອງ ຈາກ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ແລະ ອົງການຄຸ້ມຄອງວຽກງານປະມົງ ຢູ່ ສປປ ລາວ.

# ພາກທີ III
# ເນື້ອໃນຂອງນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນໍ້າ

ນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນໍ້າ ຂອງ ສປປລາວ ປະກອບດ້ວຍເນື້ອໃນ 8 ຂໍ້ ດັ່ງນີ້:

## 1. ນະໂຍບາຍ ກ່ຽວກັບ ທີ່ດິນສໍາລັບການລ້ຽງສັດ ແລະ ສັດນໍ້າ

<u>ບັນຫາ</u>:

1) ການສໍາຫຼວດ ແລະ ຂຶ້ນທະບຽນທີ່ດິນທົ່ງຫຍ້າທໍາມະຊາດທີ່ມີທ່າແຮງລ້ຽງສັດ ຍັງເຮັດບໍ່ທັນໄດ້ດີ;
2) ຍັງບໍ່ທັນມີນິຕິກໍາຄວບຄຸມເຂດປູກພືດວັດຖຸດິບອາຫານສັດ;
3) ການກໍານົດເຂດ ແລະ ແຫຼ່ງນໍ້າ ສໍາລັບການລ້ຽງສັດ ແລະ ສັດນໍ້າ ຍັງບໍ່ທັນລະອຽດ;
4) ແຜນການ ແລະ ໂຄງການສະໜັບສະໜູນ ການຄຸ້ມຄອງ ແລະ ພັດທະນາທີ່ດິນ ແລະ ແຫຼ່ງນໍ້າສໍາລັບລ້ຽງສັດ ແລະ ສັດນໍ້າ ບໍ່ທັນເຂັ້ມແຂງ ແລະ ຕໍ່ເນື່ອງ.

<u>ຈຸດປະສົງ:</u>

1) ພັດທະນາທົ່ງຫຍ້າທໍາມະຊາດ ໃຫ້ຖືກນໍາໃຊ້ເຂົ້າໃນການລ້ຽງສັດຢ່າງມີປະສິດທິຜົນ ແລະ ຍືນຍົງ;
2) ກໍານົດເຂດ ແລະ ສະຫງວນພື້ນທີ່ດິນເພື່ອປູກພືດວັດຖຸດິບອາຫານສັດໃນເຂດທີ່ເໝາະສົມ ເພື່ອຮັບປະກັນການສະໜອງສະບຽງອາຫານສັດໃຫ້ພຽງພໍ;
3) ນໍາໃຊ້ເນື້ອທີ່ດິນໃນເຂດທີ່ມີພູມອາກາດເໝາະສົມເພື່ອຂະຫຍາຍແນວພັນພືດອາຫານສັດ;
4) ນໍາໃຊ້ເນື້ອທີ່ດິນ ແລະ ແຫຼ່ງນໍ້າ ຂອງ ສູນ ສະຖານີທີ່ມີ ເຂົ້າໃນການຜະລິດແນວພັນສັດ ແລະ ສັດນໍ້າໃຫ້ເກີດປະສິດທິຜົນສູງສຸດ;
5) ຄຸ້ມຄອງ ອ່າງເກັບນໍ້າ ແລະ ອ່າງຮັບນໍ້າ ໃຫ້ເປັນແຫຼ່ງທີ່ຢູ່ອາໄສ ແລະ ຂະຫຍາຍພັນຂອງສັດນໍ້າແບບຍືນຍົງ.

ນະໂຍບາຍ:

1) ລັດເປັນເຈົ້າການສຳຫຼວດ, ຄຸ້ມຄອງ ແລະ ນຳໃຊ້ ທົ່ງຫຍ້າທຳມະຊາດ ເພື່ອສົ່ງເສີມການລ້ຽງສັດເປັນສິນຄ້າ;
2) ລັດສົ່ງເສີມການນຳໃຊ້ທີ່ດິນ ເພື່ອປູກພືດວັດຖຸດິບອາຫານສັດ, ການຜະລິດ ແນວພັນພືດອາຫານສັດ ແລະ ການສ້າງຟາມລ້ຽງສັດທີ່ໄດ້ມາດຕະຖານ;
3) ລັດສ້າງ ແລະ ຟື້ນຟູ ພື້ນທີ່ແຫຼ່ງນ້ຳ ໃນເຂດທີ່ມີເງື່ອນໄຂ ເພື່ອນຳໃຊ້ເປັນສູນ ສະຖານີ ຜະລິດລູກປາ ແລະ ສັດນ້ຳທີ່ໄດ້ມາດຕະຖານ;
4) ລັດປັບປຸງກົນໄກຄຸ້ມຄອງ ການນຳໃຊ້ແຫຼ່ງນ້ຳໃນອ່າງເກັບນ້ຳ ແລະ ອ່າງຮັບນ້ຳ ເພື່ອໃຫ້ການລ້ຽງສັດນ້ຳ ມີປະສິດຜົນ;
5) ຫຼຸດຜ່ອນຄ່າທຳນຽມ ແລະ ຄ່າບໍລິການ ການສຳຫຼວດວັດແທກຂຶ້ນທະບຽນອອກໃບຕາດິນສຳລັບການລ້ຽງສັດ ແລະ ສັດນ້ຳ 50% ແລະ ຍົກເວັ້ນການເສຍຄ່າທຳນຽມການນຳໃຊ້ທີ່ດິນທີ່ໄດ້ຂຶ້ນທະບຽນສຳລັບລ້ຽງສັດໃຫຍ່ 5 ປີ.

## 2. ນະໂຍບາຍດ້ານພະລັງງານ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

ບັນຫາ:

1) ຜູ້ປະກອບການຟາມລ້ຽງສັດທີ່ນຳໃຊ້ ເຕັກໂນໂລຊີທີ່ທັນສະໄໝ ມີຄວາມຈຳເປັນໃຊ້ໄຟຟ້າສູງຂຶ້ນ ແຕ່ໄດ້ແບກຫາບຈ່າຍຄ່າກະແສໄຟຟ້າສູງ ມີການກະທົບຕໍ່ລາຄາຕົ້ນທຶນການຜະລິດສູງຂຶ້ນ ນຳໄປສູ່ເຮັດໃຫ້ ລາຄາເບື້ອງຜູ້ບໍລິໂພກກໍສູງໄປນຳ;
2) ອັດຕາການຈ່າຍຄ່າກະແສໄຟຟ້າຂອງຜູ້ປະກອບການຊະນິດດຽວກັນ ຍັງບໍ່ທັນເປັນເອກະພາບ.

ຈຸດປະສົງ:

1) ເພື່ອສ້າງເງື່ອນໄຂໃຫ້ຜູ້ປະກອບການຟາມລ້ຽງສັດ, ຜູ້ຜະລິດ ແລະ ສະໜອງປັດໃຈການຜະລິດ ມີການນຳໃຊ້ພະລັງງານຢ່າງພຽງພໍ ເພື່ອພັດທະນາກິດຈະການດ້ວຍລາຄາໄຟຟ້າ ທີ່ສົມເຫດສົມຜົນ;
2) ເພື່ອຫຼຸດຕົ້ນທຶນການຜະລິດ ແລະ ຫຼຸດຜ່ອນການແບກຫາບຂອງຜູ້ບໍລິໂພກ.

ນະໂຍບາຍ

ລັດອອກນະໂຍບາຍສຳລັບພະລັງງານ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບການລ້ຽງສັດ ແລະ ສັດນ້ຳ ດັ່ງນີ້:

1) ໃຫ້ນະໂຍບາຍຫຼຸດຜ່ອນຄ່າກະແສໄຟຟ້າ ໃຫ້ເທົ່າກັບຄ່າກະແສໄຟຟ້າຊົນລະປະທານ ສຳລັບໂຮງງານຜະລິດອາຫານສັດ, ໂຮງງານຢາສຳລັບສັດ, ໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ ແລະ ຟາມລ້ຽງສັດ ແລະ ສັດນ້ຳ ທີ່ໄດ້ຮັບມາດຕະຖານ ຟາມລ້ຽງສັດທີ່ດີ ທີ່ຮັບຮອງຈາກກົມລ້ຽງສັດ ແລະ ການປະມົງ;
2) ຍົກເວັ້ນພາສີ-ອາກອນ ນຳເຂົ້າ ສຳລັບພາຫານະ ແລະ ອຸປະກອນຜະລິດພະລັງງານທົດແທນ ແລະ ແກັສຊີວະພາບ ທີ່ນຳໃຊ້ເຂົ້າໃນການລ້ຽງສັດ ແລະ ສັດນ້ຳ ໃນ ສປປ ລາວ;
3) ຍົກເວັ້ນພາສີ-ອາກອນ ນຳເຂົ້າ ສຳລັບອຸປະກອນເຕັກໂນໂລຊີ ທີ່ທັນສະໄໝ ທີ່ນຳໃຊ້ເຂົ້າໃນການລ້ຽງສັດ ແລະ ສັດນ້ຳ ໃນ ສປປ ລາວ;
4) ຍົກເວັ້ນພາສີ-ອາກອນ ນຳເຂົ້າ ວັດຖຸອຸປະກອນ ທີ່ນຳໃຊ້ເຂົ້າໃນການສ້າງລະບົບບຳບັດສິ່ງເສດເຫຼືອ ຫຼື ມົນລະພິດ ທີ່ເກີດຈາກການລ້ຽງສັດ ແລະ ສັດນ້ຳ ໃນ ສປປ ລາວ.

## 3. ນະໂຍບາຍ ການປະກັນຄວາມສ່ຽງ ຕໍ່ການລ້ຽງສັດ ແລະ ສັດນໍ້າ

<u>ບັນຫາ</u>

1) ຍັງປະເຊີນກັບໄພຂົມຂູ່ ເປັນຕົ້ນ: ການລະບາດຂອງພະຍາດ, ການປ່ຽນແປງຂອງດິນຟ້າອາກາດ ແລະ ຍັງມີໄພພິບັດທາງທໍາມະຊາດ;
2) ຍັງຂາດກົນໄກຄໍ້າປະກັນດ້ານລາຄາຂອງປັດໄຈການຜະລິດ ແລະ ຜະລິດຕະພັນ; ຍັງຂາດພື້ນຖານໂຄງລ່າງໃນການແປຮູບ ແລະ ເກັບສະສົມຜະລິດຕະພັນເພື່ອດັດສົມລາຄາ ແລະ ປະລິມານສິນຄ້າທີ່ເໝາະສົມ;
3) ເງິນແຮສໍາຮອງສໍາລັບການແກ້ໄຂໃນເວລາເກີດວິກິດການ ຍັງບໍ່ພຽງພໍ.

<u>ຈຸດປະສົງ</u>

1) ເພື່ອຮັບປະກັນການລ້ຽງສັດ ແລະ ສັດນໍ້າ ໃຫ້ມີການຂະຫຍາຍຕົວ ຕໍ່ເນື່ອງ ແລະ ມີຄວາມຍືນຍົງ ດ້ວຍການຄົ້ນຄວ້າ ແລະ ສ້າງຄັງແຮສໍາຮອງ ໄວ້ລ່ວງໜ້າ ເພື່ອແກ້ໄຂຄວາມສ່ຽງທີ່ຈະເກີດຂຶ້ນ.
2) ຊຸກຍູ້ສົ່ງເສີມພາກຜູ້ປະກອບການໃຫ້ໂຮມກຸ່ມ ຫຼື ສ້າງ ສະຫະກອນ ຫຼື ສະມາຄົມ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ;
3) ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບເຝົ້າລະວັງພະຍາດສັດ ແລະ ບໍລິການສັດຕະວະແພດ ພ້ອມທັງສ້າງແຜນແຮສຸກເສີນ ເພື່ອຮັບມືກັບໄພພິບັດທາງທໍາມະຊາດ.

<u>ນະໂຍບາຍ</u>

ເພື່ອປ້ອງກັນຄວາມສ່ຽງທີ່ອາດເກີດຂຶ້ນໃນວຽກງານຜະລິດສັດ ແລະ ສັດນໍ້າ ລັດໄດ້ອອກນະໂຍບາຍ ດັ່ງນີ້:

1) ລັດສະໜັບສະໜູນການສ້າງກອງທຶນຂອງກຸ່ມ ຫຼື ສະມາຄົມ ໃນທຸກລະດັບທີ່ມີເປົ້າໝາຍໃນການພັດທະນາ ການລ້ຽງສັດ ແລະ ຮັກສາສຸຂະພາບສັດ;
2) ສ້າງເງື່ອນໄຂ ແລະ ໃຫ້ນະໂຍບາຍພິເສດໃຫ້ແກ່ຜູ້ລົງທຶນໃສ່ການສ້າງລະບົບເກັບຮັກສາຜະລິດຕະພັນສັດ ແລະ ສັດນໍ້າ;
3) ຈັດຕັ້ງການຂ້າສັດ, ທໍາລາຍຊາກສັດ ເພື່ອຄວບຄຸມການລະບາດຂອງພະຍາດ ແລະ ດໍາເນີນການຊົດເຊີຍ ເພື່ອຫຼຸດຜ່ອນຄວາມເສຍຫາຍຂອງຜູ້ປະກອບການ;
4) ສ້າງຄັງແຮອາຫານສັດ ເພື່ອໃຊ້ໃນຍາມສຸກເສີນ;
5) ສ້າງຕັ້ງກອງທຶນສໍາລັບແຊກແຊງລາຄາ ຫຼື ຮັບປະກັນລາຄາຂັ້ນຕໍ່າ ເພື່ອຮັບປະກັນໃຫ້ຜູ້ຜະລິດ ແລະ ຜູ້ປະກອບການມີລາຍຮັບຈາກການລ້ຽງສັດ ແລະ ສັດນໍ້າ.

## 4. ນະໂຍບາຍສົ່ງເສີມດ້ານຄຸນນະພາບຂອງຜະລິດຕະພັນສັດ ແລະ ສັດນໍ້າ

<u>ບັນຫາ</u>

1) ໂຮງຂ້າສັດ ຍັງປະຖົມປະຖານ ແລະ ບໍ່ໄດ້ມາດຕະຖານສຸຂານາໄມ ຂອງ ພາກພື້ນ ແລະ ສາກົນ;
2) ຄຸນນະພາບ ຂອງ ຊີ້ນ ແລະ ຜະລິດຕະພັນສັດ-ສັດນໍ້າ ຍັງຕໍ່າ ຜູ້ບໍລິໂພກມີຄວາມສ່ຽງສູງທີ່ຈະໄດ້ຮັບເຊື້ອພະຍາດ ແລະ ສານປົນເປື້ອນ ຈາກ ຜະລິດຕະພັນ;
3) ຜູ້ລ້ຽງ, ຜູ້ຄ້າ, ຜູ້ຂ້າ, ຜູ້ຂົນສົ່ງ ແລະ ຜູ້ວາງຂາຍ ຍັງບໍ່ທັນເອົາໃຈໃສ່ໃນການຮັກສາຄຸນນະພາບ ຂອງຜະລິດຕະພັນ;
4) ການລົງທຶນໃນການພັດທະນາພື້ນຖານໂຄງລ່າງດ້ານການຂ້າສັດ, ຂົນສົ່ງ, ປຸງແຕ່ງ, ການເກັບຮັກສາ ແລະ ການວາງຂາຍ ຜະລິດຕະພັນສັດ-ສັດນໍ້າ ຍັງບໍ່ສູງ.

**ຈຸດປະສົງ**

1) ເພື່ອຍົກລະດັບ ການຂ້າສັດ, ການປຸງແຕ່ງ ແລະ ການວາງຂາຍ ຜະລິດຕະພັນສັດ-ສັດນໍ້າ ໃຫ້ສະອາດ ແລະ ປອດໄພ;
2) ເພື່ອເພີ່ມທະວີການໂຄສະນາປູກຈິດສໍານຶກກ່ຽວກັບຄວາມປອດໄພຂອງຜະລິດຕະພັນສັດ-ສັດນໍ້າ ຂັ້ນຕົ້ນ ແລະ ປຸກລະດົມໃຫ້ຜູ້ປະກອບການ ປະກອບສ່ວນຍົກລະດັບ ຄຸນນະພາບຜະລິດຕະພັນສັດ-ສັດນໍ້າ ໃຫ້ສູງຂຶ້ນ;
3) ເພື່ອເພີ່ມມູນຄ່າ ສັດ ແລະ ສັດນໍ້າ ໃຫ້ສູງຂຶ້ນ.

**ນະໂຍບາຍ**

ເພື່ອຍົກລະດັບ ແລະ ປັບປຸງລະບົບການຂ້າສັດ ແລະ ປຸງແຕ່ງຜະລິດຕະພັນສັດ ແລະ ສັດນໍ້າໃຫ້ມີຄຸນນະພາບ ແລະ ປອດໄພຕໍ່ຜູ້ບໍລິໂພກ ລັດໄດ້ອອກນະໂຍບາຍ ດັ່ງນີ້:

1) ລັດຈະໄດ້ຂົນຂວາຍແຫຼ່ງທຶນກູ້ ເພື່ອສ້າງຕັ້ງ ໂຮງຂ້າສັດ ແລະ ໂຮງປຸງແຕ່ງຊີ້ນ ທີ່ທັນສະໄໝ ຖືກສຸຂານາໄມ ຕາມມາດຕະຖານສາກົນ ແລ້ວມອບໂອນໃຫ້ພາກເອກະຊົນ ສໍາປະທານດໍາເນີນການ ແລ້ວໃຊ້ໜີ້ທົດແທນໃຫ້ລັດ;
2) ລັດສະໜັບສະໜູນ ແລະ ອໍານວຍຄວາມສະດວກ ໃຫ້ແກ່ຜູ້ລົງທຶນ ສ້າງ ແລະ ດໍາເນີນທຸລະກິດການຂ້າສັດ ແລະ ປຸງແຕ່ງຜະລິດຕະພັນສັດ ດ້ວຍການໃຫ້ ນະໂຍບາຍຍົກເວັ້ນພາສີ, ອາກອນມູນຄ່າເພີ່ມ ໃນການນໍາເຂົ້າວັດຖຸອຸປະກອນທີ່ກ່ຽວຂ້ອງກັບການສ້າງພື້ນຖານໂຄງລ່າງຂອງການຂ້າສັດ ແລະ ປຸງແຕ່ງຜະລິດຕະພັນສັດ ແລະ ສັດນໍ້າ;
3) ສົ່ງເສີມການສ້າງສາງເກັບຮັກສາ, ລົດຂົນສົ່ງ ແລະ ບ່ອນວາງຂາຍ ທີ່ໄດ້ມາດຕະຖານ;
4) ຍົກລະດັບລະບົບການກວດກາອະນາໄມຊີ້ນໃນໂຮງຂ້າສັດ, ການວິໄຈ ແລະ ການເຮັດກາໝາຍສິນຄ້າສະອາດປອດໄພ ທີ່ສອດຄ່ອງກັບມາດຕະຖານຂອງສາກົນ.

## 5. ນະໂຍບາຍສົ່ງເສີມດ້ານການຄ້າ ແລະ ການຕະຫຼາດ

**ບັນຫາ**

1) ຂໍ້ມູນຂ່າວສານດ້ານການຕະຫຼາດ ແລະ ການຄຸ້ມຄອງລາຄາ ສິນຄ້າປະເພດສັດ ແລະ ສັດນໍ້າ ຍັງບໍ່ທັນມີການຄຸ້ມຄອງຢ່າງເປັນລະບົບ;
2) ການວາງແຜນດຸ່ນດ່ຽງສິນຄ້າ ແລະ ການຕະຫຼາດ ຍັງເຮັດບໍ່ທັນໄດ້ດີ (ການສະໜອງ ແລະ ຄວາມຕ້ອງການ);
3) ການເປີດຕະຫຼາດສັດ-ສັດນໍ້າ ແລະ ຜະລິດຕະພັນສັດ-ສັດນໍ້າ ກັບປະເທດເພື່ອນບ້ານ ຍັງຊັກຊ້າ;
4) ມາດຕະການ ຕິດສົມຜູ້ຄ້າຂາຍສັດ ແລະ ຕະຫຼາດຂາຍສັດ ບໍ່ເຂັ້ມງວດ.

**ຈຸດປະສົງ**

1) ປັບປຸງລະບົບຂໍ້ມູນຂ່າວສານດ້ານການຕະຫຼາດ, ສິນຄ້າ ແລະ ລາຄາ ໃຫ້ຖືກຕ້ອງວ່ອງໄວ;
2) ສ້າງແຜນດຸ່ນດ່ຽງສິນຄ້າ ແລະ ການຕະຫຼາດ ກໍຄື ພາກການສະໜອງ ແລະ ພາກຄວາມຕ້ອງການ ໃຫ້ສົມດູນ;
3) ນໍາໃຊ້ມາດຕະການເພື່ອຕິດສົມ ສິນຄ້າ, ລາຄາ, ການຈໍລະຈອນ ແລະ ການສະໜອງໃຫ້ເໝາະສົມ;
4) ເພີ່ມລາຍການສິນຄ້າປະເພດສັດ-ສັດນໍ້າ, ຜະລິດຕະພັນສັດ-ສັດນໍ້າ ເພື່ອການສົ່ງອອກໃຫ້ຫຼາຍຂຶ້ນ.

**ນະໂຍບາຍ**

1) ສ້າງລະບົບຂໍ້ມູນຂ່າວສານການຕະຫຼາດສັດ ແລະ ຜະລິດຕະພັນສັດ ແລະ ສັດນໍ້າ;

2) ຫຼຸດຜ່ອນການນຳເຂົ້າຜະລິດຕະພັນສັດ-ສັດນ້ຳ ຈາກພາຍນອກ ທັນມາຊຸກຍູ້ໃຊ້ຜະລິດຕະພັນພາຍໃນ;
3) ເພີ່ມການນຳໃຊ້ສິ່ງເສດເຫຼືອຈາກໂຮງງານປຸງແຕ່ງກະສິກຳ ແລະ ອຸດສາຫະກຳ ໃຫ້ທັນມາໃຊ້ເປັນວັດຖຸດິບອາຫານສັດພາຍໃນປະເທດ;
4) ສົ່ງເສີມໃຫ້ມີການສ້າງສະມາຄົມຜູ້ຄ້າຂາຍ ສັດ ແລະ ສັດນ້ຳ ແລະ ຊຸກຍູ້ ຜູ້ປະກອບການໃນການສ້າງພື້ນຖານໂຄງລ່າງຕະຫຼາດສັດເປັນ ທີ່ໄດ້ມາດຕະຖານ;
5) ຊຸກຍູ້ ການເຮັດສັນຍາຜູກພັນລະຫວ່າງ ຜູ້ຜະລິດ ແລະ ຜູ້ຊື້ ທີ່ເປັນທຳ ແລະ ພັດທະນາການຄຸ້ມຄອງການຊື້ຂາຍສັດ ຜ່ານລະບົບອີເລັກໂຕຣນິກ.

## 6. ນະໂຍບາຍດ້ານແຮງງານ ແລະ ສະຫວັດດີການ ຕໍ່ຜູ້ລ້ຽງສັດ ແລະ ສັດນ້ຳ

ບັນຫາ

1) ການຂຶ້ນທະບຽນແຮງງານທີ່ປະກອບອາຊີບລ້ຽງສັດ ແລະ ສັດນ້ຳ ຍັງບໍ່ທັນດີ;
2) ປະລິມານ ແລະ ຄຸນນະພາບຂອງແຮງງານ ໃນຂົງເຂດ ຜູ້ລ້ຽງ, ຜູ້ປຸງແຕ່ງ ແລະ ຈໍລະຈອນ ຍັງຂາດເຂີນ;
3) ບໍ່ທັນມີນະໂຍບາຍທີ່ຊັດເຈນຕໍ່ຊາວກະສິກອນຜູ້ລ້ຽງສັດ ແລະ ຜູ້ອອກແຮງງານຢູ່ໃນສະຖານທີ່ປຸງແຕ່ງ.

ຈຸດປະສົງ

1) ເພື່ອເປັນການຍົກສູງລະດັບຊີວິດການເປັນຢູ່, ສ້າງສິ່ງຊຸກຍູ້ ແລະ ພັດທະນາສີມືແຮງງານລ້ຽງສັດ ແລະ ສັດນ້ຳໃຫ້ດີຂຶ້ນ;
2) ຄຸ້ມຄອງ ແລະ ພັດທະນາ ກຳລັງແຮງງານຢູ່ໃນຂົງເຂດຟາມລ້ຽງສັດ ແລະ ສັດນ້ຳທີ່ໄດ້ມາດຕະຖານ ໃຫ້ເຂັ້ມແຂງດ້ານການຈັດຕັ້ງ ແລະ ເປັນລະບົບ ລະບຽບດີຂຶ້ນ.

ນະໂຍບາຍ

ແຮງງານ ແມ່ນປັດໄຈສຳຄັນທີ່ສຸດຂອງຕ່ອງໂສ້ການຜະລິດສັດ ແລະ ສັດນ້ຳ. ສະນັ້ນ, ເພື່ອຍົກສູງລະດັບຊີວິດການເປັນຢູ່ ແລະ ພັດທະນາສີມືແຮງງານລ້ຽງສັດ ແລະ ສັດນ້ຳ ໃຫ້ດີຂຶ້ນ ລັດວາງນະໂຍບາຍອອກດັ່ງນີ້:

1) ອອກບັດຢັ້ງຢືນແຮງງານໃຫ້ແກ່ຜູ້ລ້ຽງສັດ ແລະ ສັດນ້ຳ ຢ່າງເປັນລະບົບ;
2) ໃຫ້ນະໂຍບາຍ ມີວັນພັກວຽກ, ເງິນອຸດໜູນ ແລະ ເງິນເພີ່ມໂມງປົກກະຕິ. ໄດ້ຮັບການກວດສຸຂະພາບ, ການເຂົ້າເຖິງລະບົບປະກັນສັງຄົມ ແລະ ໄດ້ຮັບການເບິ່ງແຍງດູແລໃນຍາມເກີດອຸບັດຕິເຫດແຮງງານ ຫຼື ມີພະຍາດອາຊີບເກີດຂຶ້ນ ແລະແຮງງານເພດຍິງ ກໍຕ້ອງໄດ້ຮັບນະໂຍບາຍພິເສດ ຕາມກົດໝາຍ ວ່າດ້ວຍ ແຮງງານ (ສະບັບປັບປຸງ) ກຳນົດ;
3) ຈັດຕັ້ງການຍ້ອງຍໍຊົມເຊີຍ ໃຫ້ແກ່ຜູ້ລ້ຽງສັດ ຫຼື ຜູ້ປະກອບການດີເດັ່ນ ດ້ວຍການ ມອບເປັນວັດຖຸ, ເງິນ ຫຼື ໃຫ້ນາມມະຍົດ ເປັນຜູ້ຊຳນານງານໃນລະດັບຕ່າງໆ ຕາມຄວາມເໝາະສົມ;
4) ລັດສົ່ງເສີມການສ້າງກຳລັງແຮງງານ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອອກແຮງງານ ແລະ ຜູ້ປະກອບການ ກ່ຽວກັບ ການລ້ຽງສັດ-ສັດນ້ຳ ແລະ ການປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

## 7. ນະໂຍບາຍດ້ານ ບຸກຄະລາກອນ ດ້ານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ

ບັນຫາ

1) ນັກວິຊາການດ້ານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຍັງບໍ່ພຽງພໍ;

2) ການບັນຈຸ ສັບຊ້ອນ ພະນັກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ບໍ່ໄດ້ຕາມແຜນຕໍາແໜ່ງງານທີ່ກໍານົດ ເນື່ອງຈາກເອົານັກວິຊາການດ້ານອື່ນມາເຮັດແທນ, ອີກປະການໜຶ່ງ ໂອກາດສໍາລັບພະນັກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ແມ່ນຍັງມີໜ້ອຍ;
3) ການນໍາໃຊ້ວິຊາການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຂອງ ຜູ້ປະກອບການ ຍັງມີໜ້ອຍ;
4) ການຝຶກອົບຮົມໄລຍະສັ້ນ ເພື່ອເພີ່ມຄວາມຮູ້ຄວາມຊໍານານ ໃຫ້ແກ່ພະນັກງານຂອງຂະແໜງ ຍັງມີໜ້ອຍ ບໍ່ຕໍ່ເນື່ອງ.

<u>ຈຸດປະສົງ</u>

1) ເພີ່ມກໍາລັງນັກວິຊາການທາງດ້ານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃຫ້ອົງການຄຸ້ມຄອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີພຽງພໍ;
2) ຊຸກຍູ້ໃຫ້ຜູ້ກະກອບການນໍາໃຊ້ນັກວິຊາຊີບທາງດ້ານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃຫ້ເຂົ້າເຮັດວຽກຢູ່ໃນຟາມລ້ຽງສັດ ແລະ ສັດນໍ້າ ໃຫ້ຫຼາຍຂຶ້ນ;
3) ຈັດຕັ້ງການຝຶກສີມືແຮງງານໃຫ້ແກ່ຊາວກະສິກອນ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ;
4) ປັບປຸງອົງກອນວິຊາຊີບລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃຫ້ສອດຄ່ອງ ກັບ ກົດໝາຍ ແລະ ຄໍາແນະນໍາ ຂອງ ອົງການຈັດຕັ້ງສາກົນ.

<u>ນະໂຍບາຍ</u>

1) ຈັດສັນໂຄຕາລັດຖະກອນພິເສດໃຫ້ແກ່ນັກວິຊາການ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃຫ້ໄດ້ຖືກບັນຈຸເຂົ້າໃນຕໍາແໜ່ງງານທີ່ຍັງຂາດເຂີນ;
2) ຈັດຕັ້ງສ້າງເວທີ ໂຄສະນາປະຊາສໍາພັນບຸກຄະລາກອນ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ເຂົ້າສູ່ລະບົບຕະຫຼາດແຮງງານ ຂອງພາກເອກະຊົນຂອງປະເທດ ເພື່ອສ້າງໂອກາດໃຫ້ຜູ້ປະກອບການ ແລະ ນັກວິຊາການໄດ້ພົບປະເພື່ອນໍາໄປສູ່ການເຮັດສັນຍາເຮັດວຽກຮ່ວມກັນ;
3) ຊຸກຍູ້ ແລະ ສະໜັບສະໜູນການສ້າງ ສະພາ ແລະ ສະມາຄົມວິຊາຊີບລ້ຽງສັດ, ສັດຕະວະແພດ ແລະ ປະມົງ ເພື່ອໃຫ້ມີການພັດທະນາວິຊາຊີບ ແລະ ໃຫ້ສາມາດເຊື່ອມໂຍງກັບການຈັດຕັ້ງ ຂອງອາຊຽນ.

## 8. ນະໂຍບາຍດ້ານ ການເງິນ ແລະ ການເຂົ້າເຖິງແຫຼ່ງທຶນ

<u>ບັນຫາ:</u>

1) ງົບປະມານ ພັດທະນາດ້ານແນວພັນສັດ ແລະ ສັດນໍ້າ, ການຜະລິດຢາສໍາລັບສັດ, ການຍົກສູງມາດຖານການປ້ອງກັນຄວາມສ່ຽງ ລວມທັງ ການປະຕິບັດມາດຕະການ ດ້ານສຸຂານາໄມ ແລະ ສຸຂານາໄມພືດຍັງບໍ່ພຽງພໍ;
2) ງົບປະມານໃນການຍົກລະດັບການເຝົ້າລະວັງ ແລະ ວິໄຈພະຍາດສັດ, ການວິໄຈສິ່ງປົນເປື້ອນ ແລະ ສານຕົກຄ້າງໃນຜະລິດຕະພັນສັດ, ການວິໄຈຄຸນນະພາບອາຫານສັດ ແລະ ງົບປະມານ ເພື່ອພັດທະນາບຸກຄະລາກອນ ເປັນຕົ້ນ ວິຊາການດ້ານສັດຕະວະແພດ ແລະ ການປະມົງ ຍັງບໍ່ພຽງພໍ;
3) ຄວາມສາມາດ ເຂົ້າເຖິງແຫຼ່ງທຶນຂອງຊາວກະສິກອນຜູ້ລ້ຽງສັດ ແລະ ສັດນໍ້າຍັງຈໍາກັດ;
4) ການປະຕິບັດນະໂຍບາຍຫຼຸດຜ່ອນ ພາສີ ແລະ ອາກອນ ຢູ່ໃນຂົງເຂດການຜະລິດ ແລະ ສະໜອງປັດໄຈການຜະລິດ ຍັງເຮັດບໍ່ທັນໄດ້ດີ.

<u>ຈຸດປະສົງ:</u>

1) ເພື່ອສ້າງເງື່ອນໄຂໃຫ້ຜູ້ລ້ຽງ, ຜູ້ຜະລິດ ແລະ ສະໜອງ ປັດໄຈການຜະລິດ ແລະ ຜູ້ປຸງແຕ່ງຜະລິດຕະພັນສັດ ແລະ ສັດນໍ້າ ໃຫ້ສາມາດເຂົ້າເຖິງແຫຼ່ງທຶນ ເພື່ອພັດທະນາກິດຈະການໃຫ້ເຕີບໃຫຍ່;

2) ເພື່ອພັດທະນາ ແລະ ປັບປຸງ ລະບົບ ບໍລິການຂອງພາກລັດ ໃຫ້ມີຄວາມສາມາດໃນການບໍລິການດ້ານວິຊາການ ເປັນຕົ້ນແມ່ນ: ການຄົ້ນຄວ້າ ແລະ ສົ່ງເສີມ ດ້ານແນວພັນ, ອາຫານສັດ, ການບໍລິການດ້ານສຸຂະພາບສັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ນະໂຍບາຍ:

ເພື່ອຮັບປະກັນໃຫ້ແກ່ການສະໜອງທຶນໃຫ້ພຽງພໍ ໃນການຂັບເຄື່ອນນະໂຍບາຍສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ໃຫ້ເປັນຮູບປະທຳ, ນະໂຍບາຍດ້ານການເງິນ ແລະ ການເຂົ້າເຖິງແຫຼ່ງທຶນ ແມ່ນມີຄວາມຈຳເປັນຫຼາຍ. ສະນັ້ນ, ລັດ ຈຶ່ງວາງນະໂຍບາຍອອກ ດັ່ງນີ້:

1) ເພີ່ມການຈັດສັນງົບປະມານຂອງລັດ ເຂົ້າໃສ່ການພັດທະນາລະບົບການບໍລິການຂອງລັດທີ່ກ່ຽວກັບແນວພັນສັດ ແລະ ສັດນ້ຳ, ອາຫານສັດ, ຢາກັນ ແລະ ປິ່ນປົວສັດ, ການວິໄຈ, ການຢັ້ງຢືນມາດຕະຖານລວມທັງການຄົ້ນຄວ້າທົດລອງໃຫ້ເຂັ້ມແຂງ;
2) ຍົກເວັ້ນອາກອນທີ່ດິນເພື່ອໃຊ້ເຂົ້າໃນການລ້ຽງສັດ ແລະ ສັດນ້ຳ ຕະຫຼອດໄປ ໃຫ້ແກ່ຜູ້ປະກອບການທີ່ມີເປົ້າໝາຍຜະລິດແນວພັນສັດ ແລະ ສັດນ້ຳ, ແນວພັນພືດອາຫານສັດ ເພື່ອຈຳໜ່າຍ;
3) ປະຕິບັດນະໂຍບາຍຍົກເວັ້ນພາສີທີ່ດິນ ໄລຍະ 3 ປີ ໃຫ້ແກ່ ຊາວກະສິກອນ ທີ່ຢຸດຕິການຖາງປ່າເຮັດໄຮ່ຫັນມາເຮັດອາຊີບລ້ຽງສັດ ແລະ ສັດນ້ຳເປັນອາຊີບຖາວອນ ຕາມໝວດທີ III ຂອງລັດຖະບັນຍັດວ່າດ້ວຍພາສີທີ່ດິນ ເລກທີ 07/ ສປປ, ລົງວັນທີ 8 ພຶດສະພາ 2007;
4) ຫຼຸດຜ່ອນ ຫຼື ຍົກເວັ້ນພາສີ ສຳລັບການນຳເຂົ້າປັດໄຈການຜະລິດ ເປັນຕົ້ນ ແນວພັນພືດ, ແນວພັນສັດ, ນ້ຳເຊື້ອສັດ, ວັກຊີນກັນພະຍາດສັດ, ຢາປົວສັດ, ວັດຖຸດິບຮັບໃຊ້ການຜະລິດທີ່ບໍ່ສາມາດຜະລິດຢູ່ພາຍໃນປະເທດ ແລະ ບໍ່ມີລັກສະນະເອົາມາຈຳໜ່າຍໂດຍກົງເພື່ອການຄ້າ ຕາມມາດຕາ 100 ຂອງກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020 ແລະ ມາດຕາ 49 ຂອງຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ເລກທີ 3269/ກງ, ລົງວັນທີ 26 ກໍລະກົດ 2021;
5) ຫຼຸດຜ່ອນ ແລະ ການຍົກເວັ້ນ ອາກອນມູນຄ່າເພີ່ມ ສຳລັບການນຳເຂົ້າປັດໄຈການຜະລິດ: ແນວພັນສັດ ແລະ ສັດນ້ຳ, ແນວພັນພືດອາຫານສັດ, ຢາກັນ ແລະ ປິ່ນປົວພະຍາດສັດ, ວັດຖຸດິບທີ່ບໍ່ສາມາດຜະລິດໄດ້ຢູ່ພາຍໃນ, ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງ ຕາມມາດຕາ 19 ຂອງ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
6) ຍົກເວັ້ນອາກອນກຳໄລຂອງຜູ້ລົງທຶນໂດຍອີງຕາມລຳດັບ ແລະ ເຂດ ທີ່ກຳນົດໄວ້ ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 14/ສພຊ, ລົງວັນທີ 17 ກໍລະກົດ 2016 ແລະ ບໍ່ເກັບອາກອນລາຍໄດ້ ຫຼື ມີນະໂຍບາຍຜ່ອນຜັນອາກອນລາຍໄດ້ ຂອງຜູ້ລ້ຽງສັດ ແລະ ສັດນ້ຳ ຈຸນລະວິສາຫະກິດ ທີ່ຖືບັນຊີ ແລະ ມີລາຍຮັບຕ່ຳກວ່າ 50 ລ້ານ ກີບຕໍ່ປີ ຫຼື ຫຼາຍກວ່ານັ້ນ ຕາມມາດຕາ 29 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019;
7) ກຳນົດ ແລະ ອອກນະໂຍບາຍເຂົ້າເຖິງແຫຼ່ງທຶນຂອງລັດຖະບານ ຕາມປະເພດ ກິດຈະການລ້ຽງສັດ ແລະ ສັດນ້ຳ ດ້ວຍອັດຕາດອກເບ້ຍ, ໄລຍະການກູ້ຢືມ ແລະ ການຜ່ອນຜັນ ການທົດແທນທຶນຄືນ ທີ່ເໝາະສົມ ໂດຍຕົ້ນຕໍໃຫ້ກວມເອົາ 13 ປະເພດ ຂອງຜູ້ປະກອບການ ດັ່ງຕາຕະລາງ ລຸ່ມນີ້:

| ລ/ດ | ປະເພດຜູ້ປະກອບການ | ໄລຍະການກູ້ຢືມ | ນະໂຍບາຍ ອັດຕາ ແລະ ການຊຳລະດອກເບ້ຍ | ປອດຕົ້ນທຶນ |
|---|---|---|---|---|
| 1 | ຜູ້ປະກອບການຟາມຜະລິດລູກງົວ | ເກີນ 10 ປີ | 2% ປອດດອກເບ້ຍ 5 ປີ | 4 ປີ |
| 2 | ຜູ້ປະກອບການຟາມຜະລິດລູກໝູ | ເກີນ 5 ປີ | 3% ປອດດອກເບ້ຍ 5 ປີ | 3 ປີ |

| | | | | |
|---|---|---|---|---|
| 3 | ຜູ້ປະກອບການຟາມຜະລິດລູກສັດນ້ຳ ເພື່ອຈຳໜ່າຍ | ເກີນ 5 ປີ | 3% ປອດດອກເບ້ຍ 3 ປີ | 2 ປີ |
| 4 | ຜູ້ປະກອບການລ້ຽງ ງົວ ຄວາຍ ນົມ | ເກີນ 10 ປີ | 2% ປອດດອກເບ້ຍ 5 ປີ | 4 ປີ |
| 5 | ຜູ້ປະກອບການຟາມລ້ຽງງົວຊີ້ນ | ເກີນ 5 ປີ | 5% ປອດດອກເບ້ຍ 4 ປີ | 3 ປີ |
| 6 | ຜູ້ປະກອບການຟາມລ້ຽງແບ້ ແລະ ແກະ ຊີ້ນ | ເກີນ 5 ປີ | 5% ປອດດອກເບ້ຍ 3 ປີ | 2 ປີ |
| 7 | ຜູ້ປະກອບການຟາມລ້ຽງໝູຊີ້ນ | ເກີນ 5 ປີ | 5% ປອດດອກເບ້ຍ 4 ປີ | 2 ປີ |
| 8 | ຜູ້ປະກອບການຟາມລ້ຽງສັດປີກເພື່ອໃຫ້ຊີ້ນ ແລະ ໃຫ້ໄຂ່, ຟາມລ້ຽງປາ ແລະ ສັດນ້ຳເປັນສິນຄ້າ | ເກີນ 5 ປີ | 5% ປອດດອກເບ້ຍ 3 ປີ | 2 ປີ |
| 9 | ຜູ້ຜະລິດ ອາຫານສັດ ແລະ ອາຫານສັດນ້ຳ | ເກີນ 5 ປີ | 5% ປອດດອກເບ້ຍ 3 ປີ | 4 ປີ |
| 10 | ຜູ້ຜະລິດແນວພັນພືດອາຫານສັດເປັນສິນຄ້າ | ເກີນ 3 ປີ | 3% ປອດດອກເບ້ຍ 3 ປີ | 2 ປີ |
| 11 | ຜູ້ປະກອບການໂຮງງານຂ້າສັດທັນສະໄໝ ແລະ ໂຮງງານປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ | ເກີນ 5 ປີ | 5% ປອດດອກເບ້ຍ 2 ປີ | 3 ປີ |
| 12 | ຜູ້ປະກອບການຜະລິດຢາສັດຕະວະແພດ | ເກີນ 10 ປີ | 3% ປອດດອກເບ້ຍ 3 ປີ | 4 ປີ |
| 13 | ຜູ້ຜະລິດນ້ຳເຊື້ອສັດ ສະໜອງໃຫ້ແກ່ ການປະສົມພັນທຽມ | ເກີນ 3 ປີ | 3% ປອດດອກເບ້ຍ 2 ປີ | 2 ປີ |

## ພາກທີ IV
## ມາດຕະການຈັດຕັ້ງປະຕິບັດ

ພາຍໃຕ້ການຊີ້ນຳຂອງລັດຖະບານ, ກະຊວງກະສິກຳ ແລະ ປ່າໄມ້ ຈະໄດ້ ແຕ່ງຕັ້ງ ຄະນະຮັບຜິດຊອບຂັບເຄື່ອນ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ ໂດຍມີ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ ແລະ ມີຮອງ ຫຼື ຄະນະລັດຖະມົນຕີຂອງບັນດາກະຊວງທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະກຳມະການຊີ້ນຳ ໂດຍຈະມີໜ້າທີ່ ໃນການ ຊີ້ນຳ ດ້ານການວາງແຜນ, ສ້າງກົນໄກ ແລະ ສະເໜີມາດຕະການຈັດຕັ້ງປະຕິບັດນະໂຍບາຍ ພ້ອມທັງພິຈາລະນາໂຄງການລົງທຶນທີ່ຈະໄດ້ຮັບນະໂຍບາຍ ແລະ ສະຫຼຸບ ລາຍງານ ໃຫ້ລັດຖະບານຮັບຊາບ ຢ່າງເປັນປົກກະຕິ.

ໃນການຈັດຕັ້ງປະຕິບັດນະໂຍບາຍ, ກະຊວງກະສິກຳ ແລະ ປ່າໄມ້ ມີຄວາມຮັບຜິດຊອບ ດັ່ງນີ້:

1) ປະຕິບັດມາດຕະການກະຕຸ້ນການຜະລິດ ດ້ວຍການສະເໜີເປັນໂຄງການລະອຽດ ເພື່ອສະເໜີຕໍ່ລັດຖະບານອະນຸມັດ;
2) ຮ່າງລະບຽບການ ເພື່ອສ້າງຕັ້ງກອງທຶນ ພັດທະນາ ແລະ ປ້ອງກັນຄວາມສ່ຽງ ຕໍ່ການລ້ຽງສັດ ແລະ ສັດນ້ຳ;
3) ແຕ່ງຕັ້ງຄະນະກຳມະການ ກຳນົດມາດຕະຖານການຝຶກອົບຮົມ, ຄົ້ນຄວ້າກົນໄກຜົນຕອບແທນ, ມາດຕະຖານຟາມ, ຫ້ອງໜ່ວຍລາຄາ ລວມທັງ ການອອກແບບການກວດກາ ແລະ ຢັ້ງຢືນມາດຕະຖານການຜະລິດ ແລະ ປຸງແຕ່ງທີ່ດີ;
4) ພັດທະນາຈັດຕັ້ງກຸ່ມ, ສະຫະກອນ ແລະ ຈັດຕັ້ງຝຶກອົບຮົມດ້ານເຕັກນິກຮອບດ້ານໃຫ້ແກ່ສະມາຊິກກຸ່ມຜູ້ລ້ຽງສັດ ແລະ ສັດນ້ຳ ເພື່ອສູ້ຊົນຫັນປ່ຽນຊາວກະສິກອນຈາກຜູ້ດູແລຮັກສາ ແລະ ຊົມໃຊ້ສັດ ໃຫ້ກາຍເປັນຜູ້ຜະລິດສັດແບບມືອາຊີບ ເພື່ອເນັ້ນໃສ່ປະສິດທິພາບ, ຄຸນນະພາບ, ຄວາມປອດໄພ ໃຫ້ສູງກວ່າປະລິມານ;

5) ປະສານ, ສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ພັດທະນາດ້ານການຕະຫຼາດ ແລະ ການຄ້າໂດຍໃຫ້ເນັ້ນໃສ່ການຄ້າແບບເປັນທຳ, ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ ແລະ ຄົ້ນຄວ້າຮ່າງລະບຽບການສ້າງຕັ້ງກອງທຶນຄໍ້າປະກັນຄວາມສ່ຽງດ້ານລາຄາ ແລະ ການລົງທຶນ;
6) ປະສານກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ທະນາຄານແຫ່ງ ສປປ ລາວ ເພື່ອຄົ້ນຄວ້າ ຊອກຫາ ແລະ ຈັດສັນ ງົບປະມານ ເຂົ້າໃນການປັບປຸງ ພື້ນຖານໂຄງລ່າງກ່ຽວກັບລະບົບການບໍລິການຂອງລັດ ເປັນຕົ້ນ ການພັດທະນາ ແລະ ສົ່ງເສີມດ້ານ ແນວພັນສັດ ແລະ ສັດນໍ້າ, ອາຫານສັດ, ຢາກັນ ແລະ ປິ່ນປົວສັດ, ການວິໄຈພະຍາດສັດ, ລວມທັງການຄົ້ນຄວ້າທົດລອງ, ການສົ່ງເສີມ ລວມທັງການຍົ້ງຍືນດ້ານມາດຕະຖານໃຫ້ຮັບປະກັນ. ພ້ອມນັ້ນ ກໍໃຫ້ຄົ້ນຄວ້າກົນໄກເອື້ອອຳນວຍ, ສະໜັບສະໜູນເພື່ອສ້າງເງື່ອນໄຂ ແລະ ສະເໜີລັດຖະບານ ເພື່ອໃຫ້ຜູ້ລ້ຽງສັດ ແລະ ສັດນໍ້າ ໄດ້ເຂົ້າເຖິງແຫຼ່ງທຶນ ແນໃສ່ ຍູ້ແຮງຂະບວນການຜະລິດສັດ ແລະ ສັດນໍ້າຂອງຊາວກະສິກອນໃຫ້ມີການຂະຫຍາຍຕົວ ທັງປະລິມານ ແລະ ຄຸນນະພາບ;
7) ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງສຶກສາທິການ ແລະ ກິລາ ແລະ ມະຫາວິທະຍາໄລແຫ່ງຊາດ ລວມທັງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ຮ່ວມກັນຂັບເຄື່ອນນະໂຍບາຍສະບັບນີ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ມີປະສິດທິຜົນ;
8) ຮ່ວມມືກັບອົງການກວດສອບແຫ່ງລັດ ໃນການ ກວດກາ ຕິດຕາມ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ ແລະ ໂຄງການຕ່າງໆ ທີ່ຢູ່ພາຍໃຕ້ການອະນຸມັດຂອງລັດຖະບານ ຕາມຫຼັກການ ຄວາມຖືກຕ້ອງສອດຄ່ອງກັບເປົ້າໝາຍຂອງນະໂຍບາຍ, ມີປະສິດທິພາບ, ມີປະສິດທິຜົນ, ຮັບປະກັນຄວາມຍືນຍົງ, ໂປ່ງໃສ ເປັນມິດກັບສິ່ງແວດລ້ອມ ແລະ ມີຜົນປະໂຫຍດໃຫ້ແກ່ການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດຊາດ ແລະ ປະຊາຊົນຢ່າງແທ້ຈິງ;
9) ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ພາກເອກະຊົນ ໃຫ້ເຂົ້າເຖິງນະໂຍບາຍທີ່ລັດກຳນົດ ແລະ ເປັນເຈົ້າການ ໃນການສຶກສາຄວາມເປັນໄປໄດ້, ສະເໜີໂຄງການ ແລະ ປະກອບສ່ວນເຂົ້າໃນການລົງທຶນ ເພື່ອພັດທະນາ ການລ້ຽງສັດ ແລະ ສັດນໍ້າ ຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຍືນຍົງ ບົນພື້ນຖານການນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ເໝາະສົມ ຕາມທິດນຳ 3 ການຮ່ວມມື ຄື: ການຮ່ວມມືລະຫວ່າງລັດ-ຜູ້ປະກອບການ ແລະ ປະຊາຊົນ.

## ພາກທີ V
## ການຕິດຕາມ ແລະ ປະເມີນຜົນ

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້ ໂດຍມີການ ຈັດຕັ້ງ ການເກັບກຳຂໍ້ມູນ, ວິເຄາະ-ວິໄຈ ແລະສະຫຼຸບ ຕີລາຄາຖອດຖອນບົດຮຽນກ່ຽວກັບຄວາມຄືບໜ້າ, ຄວາມສອດຄ່ອງ ແລະ ຂີດຄວາມສາມາດໃນການປະຕິບັດ ບັນດາ ຈຸດປະສົງຄາດໝາຍທີ່ນະໂຍບາຍກຳນົດໄວ້. ຂະແໜງການທີ່ກ່ຽວຂ້ອງ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ມີໜ້າທີ່ ເຂົ້າຮ່ວມໃນຂະບວນການຕິດຕາມ, ກວດກາ, ປະເມີນຜົນ ແລະ ສາມາດຖືເອົາຜົນສຳເລັດຂອງການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ.

ການຕິດຕາມກວດກາ ຈະເນັ້ນໃສ່ ສອງດ້ານ ຄື: (1) ການຕິດຕາມກວດກາບັນດາປັດໄຈຂາເຂົ້າ ແລະ ຜົນງານຕ່າງໆ; (2) ການຕິດຕາມກວດກາໝາກຜົນໂດຍລວມ ຫຼື ການຕິດຕາມກວດກາຜົນກະທົບ. ການຕິດຕາມກວດກາໃຫ້ລວມເອົາທັງການຕິດຕາມ ບັນດາປັດໄຈໃນການນຳເຂົ້າ ທີ່ໃຫ້ເຫັນເຖິງລາຍຈ່າຍພາກລັດ ແລະ ການຊ່ວຍເຫຼືອຂອງຕ່າງປະເທດ.

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເຈົ້າການ ຕິດຕາມກວດກາ ແລະ ປະເມີນຜົນ ຢູ່ຂັ້ນທ້ອງຖິ່ນ ໂດຍໃຫ້ອີງໃສ່ເປົ້າໝາຍມະຫາພາກຂອງແຂວງ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້. ພ້ອມດຽວກັນນັ້ນ, ແຂວງ ແລະ ຂະແໜງການຂອງແຂວງ ຕ້ອງມີການພົວພັນກັບໜ່ວຍງານຄຸ້ມຄອງມະຫາພາກຂອງຂັ້ນສູນກາງ ຢ່າງສະໜິດແໜ້ນ ແລະ ເປັນປົກກະຕິ ເພື່ອໃຫ້ສາມາດຕິດຕາມ ການຈັດຕັ້ງປະຕິບັດນະໂຍບາຍໃນລະດັບແຂວງຢ່າງມີປະສິດທິຜົນ. ນອກຈາກນັ້ນ, ແຂວງຕ້ອງເກັບກຳ, ສັງລວມຂໍ້ມູນຂອງຕົນຢ່າງຄົບຖ້ວນ ແລະ ຊັດເຈນ ເປັນລະບົບ ເພື່ອສະໜອງໃຫ້ແກ່ຂັ້ນສູນກາງ. ສະນັ້ນ, ເພື່ອຮັບປະກັນການຕິດຕາມກວດກາຢ່າງເປັນປົກກະຕິ ແລະ ຖືກຕ້ອງ ແຂວງຕ້ອງມີລະບົບຂໍ້ມູນຂ່າວສານ ທີ່ຕິດພັນກັບຫ້ອງການຂັ້ນເມືອງ ຢ່າງຈະແຈ້ງ ພ້ອມທັງປະຕິບັດລະບອບການຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການ ໃຫ້ເປັນລະບົບປົກກະຕິ.

ນະຄອນຫຼວງວຽງຈັນ, ວັນທີ 20 JUN 2022

**ລັດຖະມົນຕີ**

**ປອ. ເພັດ ພົມພິພັກ**

# ເອກະສານອ້າງອີງ


1. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນ ທີ 11 ພະຈິກ 2016;
2. ກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 9 ກໍລະກົດ 2009;
3. ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ່ IX (2021-2025) ສະບັບເລກທີ 0303/ກປ, ລົງວັນທີ 03 ມິຖຸນາ 2021;
4. ດຳລັດ ວ່າດ້ວຍ ການກັນ ແລະ ຄວບຄຸມພະຍາດສັດ ສະບັບເລກທີ 228/ລບ, ລົງວັນທີ 31 ພຶດສະພາ 2011;
5. ດຳລັດ ວ່າດ້ວຍ ການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012;
6. ດຳລັດວ່າດ້ວຍ ອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 1/2/2020;
7. ດຳລັດວ່າດ້ວຍ ຢາສັດຕະວະແພດ ສະບັບ ເລກທີ 199/ລບ, ລົງວັນທີ 13/3/2020;
8. ດຳລັດວ່າດ້ວຍການຂ້າສັດ ແລະ ການກວດກາອານາໄມຊີ້ນ ສະບັບ 516/ລບ, ລົງວັນທີ 2/9/2020;
9. ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງກິດຈະການຟາມ ລ້ຽງສັດ ໃນ ສປປ ລາວ ສະບັບເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013;
10. ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ ການນຳເຂົ້າ, ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ສະບັບເລກທີ 0795/ກປ, ລົງວັນທີ 18/4/2019;
11. ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ ການນຳເຂົ້າ, ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ສະບັບເລກທີ 4211/ກປ ລົງວັນທີ 29/11/2019.

## ເອກະສານຊ້ອນທ້າຍ 1.

## ເຫດຜົນ ແລະ ຄໍາອະທິບາຍ ທີ່ເປັນບ່ອນອີງໃຫ້ແກ່ກໍານົດນະໂຍບາຍດ້ານການເງິນ ແລະ ເຂົ້າເຖິງແຫຼ່ງທຶນໃຫ້ແກ່ຜູ້ປະກອບການ

1) ເຫດຜົນ ການໃຫ້ນະໂຍບາຍແກ່ ຜູ້ປະກອບການຟາມຜະລິດລູກງົວ ຄວນມີແຫຼ່ງເງິນກູ້ ໄລຍະເກີນ 10 ປີອັດຕາດອກເບ້ຍ 2% ປອດດອກເບ້ຍ 5 ປີ ແລະ ປອດຕົ້ນ 4 ປີ. ຍ້ອນວ່າການລ້ຽງງົວແມ່ພັນແມ່ນ ຄວາມຫຍຸ້ງຍາກ ແລະ ມີຂໍ້ຈໍາກັດທົ່ວໄປ ເປັນຕົ້ນ: ແມ່ງົວ ໃຫ້ລູກປີລະເທື່ອ ຫຼື ໃຊ້ເວລາຍາວກວ່າການລ້ຽງສັດເສດຖະກິດອື່ນ ແມ່ງົວໃຫ້ລູກໄດ້ພຽງ 1 ໂຕຕໍ່ຄັ້ງ, ແມ່ງົວຕ້ອງມີອາຍຸ 3-4 ປີຈຶ່ງເລີ່ມໃຫ້ລູກໄດ້, ແມ່ງົວທີ່ເກີດລູກ ແລ້ວ ຕ້ອງເອົາໃຈໃສ່ລ້ຽງຢ່າງດີ ຈຶ່ງຈະໃຫ້ລູກປົກກະຕິໄດ້; ນອກຈາກນີ້ ການລ້ຽງງົວແມ່ພັນຜະລິດລູກຍັງເປັນກິດຈະກໍາຕົ້ນນໍ້າທີ່ສໍາຄັນ ຖ້າບໍ່ມີຜູ້ລົງທຶນເຮັດ ກິດຈະກໍາອື່ນຕາມຫຼັງຈະບໍ່ເກີດຂຶ້ນ; ຕ້ອງໃຊ້ເງິນທຶນ, ເຕັກນິກ, ໄລຍະເວລາ ແລະ ຈຸດຄຸ້ມທຶນ ທີ່ຫຼາຍກວ່າກິດຈະກໍາໃນຕ່ອງໂສ້ອື່ນ ປະມານ 6-7 ປີ ຈຶ່ງມີລາຍຮັບ. ໄດ້ຄິດໄລ່ແລ້ວ ຖ້າ ມີຜູ້ບໍລິໂພກຊີ້ນງົວ 200.000 ຄົນ ຫຼື 1.000.000 ກິໂລຕໍ່ປີ, ຕ້ອງການມີແມ່ຄ້າຂາຍຊີ້ນງົວຂາຍໄດ້ມື້ລະ 20 ກລ 137 ຄົນ, ມີໂຮງຂ້າສັດ 2 ແຫ່ງ, ມີນາຍຮ້ອຍ ພຽງ 1 ຄົນ, ຕ້ອງມີຜູ້ລ້ຽງທອມຂະໜາດ 30 ໂຕຕໍ່ຊຸດ ປະມານ 60 ຟາມ ແລະ ຕ້ອງມີຜູ້ ລ້ຽງຝູງງົວພໍ່ ແມ່ພັນ ແລະ ອື່ນ ຂະໜາດ 50 ໂຕ ປະມານ ກວ່າ 200 ຟາມ;

2) ເຫດຜົນໃຫ້ນະໂຍບາຍແກ່ຜູ້ປະກອບການຟາມຜະລິດລູກໝູຄວນມີແຜລ່ງເລີນກູ້ ເກີນ 5 ປີ ດອກເບ້ຍ 3% ປອດດອກເບ້ຍ 5 ປີ ແລະ ປອດຕົ້ນ 3 ປີ ກໍຍ້ອນວ່າ ແມ່ໝູໃຫ້ລູກປີລະ ປະມານ 2 ເທື່ອເຄິ່ງ ຫຼື ໃຊ້ເວລາຍາວກວ່າການລ້ຽງສັດເສດຖະກິດອື່ນ ນອກຈາກງົວ, ແມ່ໝູໃຫ້ລູກໄດ້ 24 ໂຕຕໍ່ປີ, ແມ່ໝູຕ້ອງມີອາຍຸ 8 ເດືອນ ຫາ 1 ປີຈຶ່ງເລີ່ມໃຫ້ລູກໄດ້, ເມື່ອແມ່ໝູທີ່ເກີດລູກແລ້ວ ຕ້ອງເອົາໃຈໃສ່ລ້ຽງຢ່າງດີ ຈຶ່ງຈະໃຫ້ລູກປົກກະຕິໄດ້ໃນຊອກຕໍ່ໄປ, ອາຫານໝູ ມີລາຄາໃກ້ຄຽງກັບອາຫານຂອງຄົນເຮົາ. ການລ້ຽງໝູຜະລິດລູກ ແມ່ນກິດຈະກໍາຕົ້ນນໍ້າທີ່ສໍາຄັນ ຖ້າບໍ່ມີຜູ້ລົງທຶນເຮັດ ກິດຈະກໍານີ້ ກິດຈະກໍາອື່ນຕາມມາຈະບໍ່ເກີດຂຶ້ນ; ຕ້ອງໄດ້ໃຊ້ເງິນທຶນ, ເຕັກນິກ, ໄລຍະເວລາ ແລະ ຈຸດຄຸ້ມທຶນ ທີ່ຫຼາຍກວ່າກິດຈະກໍາລ້ຽງສັດອື່ນ ນອກຈາກງົວຄື ປະມານ 4-5 ປີ ຈຶ່ງມີລາຍຮັບ ແລະ ຄຸ້ມທຶນ. ໄດ້ມີການຄິດໄລ່ແລ້ວ ຖ້າ ມີຜູ້ບໍລິໂພກຊີ້ນໝູ 200.000 ຄົນ ຫຼື ປະມານ 2.000.000 ກິໂລຕໍ່ປີ, ຕ້ອງການມີແມ່ຄ້າຂາຍຊີ້ນທີ່ຂາຍຊີ້ນໝູໄດ້ 30 ຕໍ່ວັນ 137 ຄົນ, ມີໂຮງຂ້າໝູ 1 ແຫ່ງ, ມີນາຍຮ້ອຍ ພຽງ 1 ຄົນ, ຕ້ອງມີຜູ້ລ້ຽງໝູຊີ້ນ 300 ໂຕຕໍ່ຊຸດ ປະມານ 22 ຟາມ ແລະ ຕ້ອງມີຜູ້ ລ້ຽງໝູ ພໍ່ ແມ່ພັນ 500 ໂຕຕໍ່ຟາມ ປະມານ 40 ຟາມ;

3) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ປະກອບການຟາມຜະລິດລູກສັດນໍ້າ ເພື່ອຈໍາໜ່າຍ ຄວນມີແຫຼ່ງເງິນກູ້ ເກີນ 5 ປີ, ດອກເບ້ຍ 3% ປອດດອກເບ້ຍ 3 ປີ ແລະ ປອດຕົ້ນທຶນ 2 ປີ ຍ້ອນວ່າມີຂໍ້ຈໍາກັດທີ່ຕ້ອງໄດ້ລ້ຽງແມ່ສັດນໍ້າ ແລະ ບໍລິຫານຈັດການ ໃຫ້ອາຫານ, ປະສົມພັນ, ຟັກໄຂ່, ອະນຸບານ ດ້ວຍອາຫານທີ່ມີທາດບໍາລຸງສູງ ຫຼື ໃຊ້ເວລາຍາວກວ່າການລ້ຽງສັດນໍ້າເພື່ອເອົາຊີ້ນທົ່ວໄປ, ແມ່ສັດນໍ້າໃຫ້ ໄຂ່ ຫຼາຍ ແຕ່ ອັດຕາການຫຼອດຕາຍຂອງລູກສັດນໍ້າໃນໄລຍະອະນຸບານ ຕໍ່າ, ຕົວຢ່າງປານິນ ຕ້ອງມີອາຍຸ 5-6 ເດືອນ ຈຶ່ງອອກໄຂ່ໄດ້ ແລະ ຕ້ອງໃຊ້ອັດຕາພໍ່ພັນສູງ 1:1 ຫຼື 1:2, ອາຫານປາອະນຸບານ ຕ້ອງມີ ທາດຊີ້ນສູງກວ່າ ອາຫານສັດທົ່ວໄປ ຕົ້ນທຶນອາຫານຈະສູງກວ່າ. ຄືກັນກັບ ການຜະລິດແນວພັນສັດບົກ ສັດນໍ້າ ແມ່ນກິດຈະກໍາຕົ້ນນໍ້າ ທີ່ສໍາຄັນ ຖ້າບໍ່ມີຜູ້ລົງທຶນເຮັດ ກິດຈະກໍານີ້ ກິດຈະກໍາອື່ນຕາມມາຈະບໍ່ເກີດຂຶ້ນ;ມີການນໍາໃຊ້ເງິນທຶນໃສ່ໜອງລ້ຽງສັດນໍ້າ, ໃຊ້ເຕັກນິກລະອຽດອ່ອນໂດຍສະເພາະແມ່ນການຟັກໄຂ່ ແລະ ອະນຸບານ, ຕ້ອງໄລຍະເວລາ ແລະ ຈຸດຄຸ້ມທຶນທີ່ຫຼາຍກວ່າກິດຈະກໍາລ້ຽງສັດອື່ນຄື ປະມານ 2-3 ປີ ຈຶ່ງມີລາຍຮັບ ແລະ ຄຸ້ມທຶນ. ໄດ້ຄິດໄລ່ແລ້ວ ຖ້າ ມີຜູ້ບໍລິໂພກຊີ້ນປານິນ 200.000 ຄົນ ຫຼື ປະມານ 2.400.000 ກິໂລຕໍ່ປີ, ຕ້ອງການມີແມ່ຄ້າຂາຍປາທີ່ຂາຍປາໄດ້ 40 ກລ ຕໍ່ວັນ 58 ຄົນ ແລະ ຕ້ອງ

ມີຜູ້ລ້ຽງປາຊີ້ນ 20.000 ໂຕຕໍ່ຟາມຕໍ່ປີ 70 ຟາມ ແລະ ຕ້ອງມີຜູ້ລ້ຽງພໍ່ ແມ່ພັນ ປາ ສະໜອງລູກປາຈຶ່ງຈະເປັນໄປໄດ້;

4) ເຫດຜົນການສະເໜີໃຫ້ນະໂຍບາຍແກ່ຜູ້ປະກອບການລ້ຽງ ງົວ ຄວາຍ ນົມເກີນ 10 ປີ, ດອກເບ້ຍ 2% ປອດດອກເບ້ຍ 5 ປີ, ປອດຕົ້ນ 4 ປີ ກໍຍ້ອນວ່າເປັນທຸລະກິດ ທີ່ຕ້ອງສິ່ງເສີມ ແລະ ມີຂໍ້ຫຍຸ້ງຍາກຫຼາຍ ຄືກັນກັບ ການລ້ຽງງົວພໍ່ແມ່ພັນຜະລິດລູກ ແລະ ຕ້ອງໄດ້ເພີ່ມວຽກຣີດນົມ, ເກັບຮັກສາ ແລະ ຈໍາໜ່າຍນໍ້ານົມ ຕື່ມອີກ;

5) ເຫດຜົນໃຫ້ນະໂຍບາຍ ແກ່ຜູ້ປະກອບການຟາມລ້ຽງງົວຊີ້ນ ຄວນມີແຫຼ່ງເງິນກູ້ເກີນ 5 ປີ ອັດຕາ ດອກເບ້ຍ 5%, ປອດດອກເບ້ຍ 4 ປີ ປອດຕົ້ນ 3 ປີ ຍ້ອນວ່າ ກິດຈະການນີ້ ໂດຍລວມແມ່ນມີຄວາມຫຍຸ້ງຍາກ ແຕ່ຖ້າທຽບໃສ່ການລ້ຽງງົວພໍ່ແມ່ພັນ ກໍງ່າຍກວ່າຍ້ອນໃຊ້ເວລາທອມໜ້ອຍ, ໃຫ້ຜົນຕອບແທນໄວ ແຕ່ກໍຍັງຫຍຸ້ງຍາກວ່າການລ້ຽງໝູ ຍ້ອນຕ້ອງການຈັດການຈັດຊື້ງົວເຂົ້າມາທອມດ້ວຍລາຄາສູງ, ມີການຈັດການທົ່ງຫຍ້າ ຈັດຫາອາຫານຫຍາບຈໍານວນຫຼາຍ;

6) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ປະກອບການຟາມລ້ຽງແບ້ ແລະ ແກະ ຊີ້ນ ທີ່ຄວນມີແຫຼ່ງເງິນກູ້ ເກີນ 5 ປີ ອັດຕາ ດອກເບ້ຍ 5% ປອດດອກເບ້ຍ 3 ປີ ແລະ ປອດຕົ້ນ 2 ປີ. ນັ້ນ ກໍຄືກັນກັບການລ້ຽງສັດອື່ນ ໂດຍລວມກໍແມ່ນເປັນກິດຈະການທີ່ຫຍຸ້ງຍາກທຽບໃສ່ການປູກພືດ, ແຕ່ກໍງ່າຍແມ່ນງ່າຍກວ່າການລ້ຽງງົວທອມ ຍ້ອນວ່າຈະໃຊ້ພື້ນທີ່, ອາຫານ ແລະ ໃຊ້ເວລາໜ້ອຍໜ້ອຍກວ່າ, ຕົ້ນທຶນການຜະລິດບໍ່ສູງ ແຕ່ຈະໃຫ້ຜົນຕອບແທນໄວກວ່າ;

7) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ປະກອບການຟາມລ້ຽງໝູຊີ້ນ ຄວນມີແຫຼ່ງເງິນກູ້ ເກີນ 5 ປີ, ອັດຕາດອກເບ້ຍ 5% ປອດດອກເບ້ຍ 4 ປີ ແລະ ປອດຕົ້ນ 2 ປີ. ຍ້ອນວ່າ ຍັງມີຄວາມຍຸ້ງຍາກຫາກປຽບທຽບ ກັບການປູກພືດ. ຕ້ອງໄດ້ລົງທຶນໃສ່ຄອກສູງ, ແຕ່ໂດຍລວມກໍຍັງງ່າຍກວ່າ ການລ້ຽງໝູພໍ່ແມ່ພັນ, ການລ້ຽງງົວພໍ່ພັນ ແລະ ທອມງົວ ໂດຍຈະໃຊ້ພື້ນຈໍາກັດ ແລະ ໃຊ້ເວລາໜ້ອຍ ຕົ້ນທຶນການຜະລິດ ໜ້ອຍກວ່າການລ້ຽງແບບແນວພັນ, ໃຫ້ຜົນຕອບແທນໄວ;

8) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ປະກອບການຟາມລ້ຽງສັດປີກເພື່ອໃຫ້ຊີ້ນ ແລະ ໃຫ້ໄຂ່, ຟາມລ້ຽງປາ ແລະ ສັດນໍ້າເປັນສິນຄ້າ ທີ່ຄວນໃຫ້ມີແຫຼ່ງເງິນກູ້ເກີນ 5 ປີ, ອັດຕາດອກເບ້ຍ 5% ປອດດອກເບ້ຍ 3 ປີ, ປອດຕົ້ນ 2 ປີ. ຍ້ອນວ່າ ມີຄວາມສະດວກແລະ ຫຍຸ້ງຍາກ ຄືກັນກັບການລ້ຽງໝູຊີ້ນ ແຕ່ແຕກຕ່າງຄືຈະຜົນຕອບແທນໄວກວ່າການລ້ຽງໝູຊີ້ນ;

9) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ຜະລິດ ອາຫານສັດ ແລະ ອາຫານສັດນໍ້າ ທີ່ຄວນໃຫ້ມີແຫຼ່ງເງິນກູ້ ເກີນ 5 ປີ ອັດຕາດອກເບ້ຍ 5% ປອດດອກເບ້ຍ 3 ປີ ແລະ ປອດຕົ້ນ 4 ປີ ຍ້ອນວ່າເປັນກິດຈະການທີ່ສໍາຄັນ ທີ່ເປັນຜູ້ຜະລິດສະໜອງປັດໃຈການຜະລິດ ທີ່ຈໍາເປັນ ແລະ ເຫັນວ່າຈະຫຍຸ້ງຍາກວ່າການເຮັດໂຮງສີເຂົ້າ ຍ້ອນຕ້ອງໄດ້ເອົາໃຈໃສ່ປະສົມຕາມສູດຫານສັດ ແລະ ຕ້ອງການ ເຕັກນິກການປະສົມ ແລະ ຫຸ້ມຫໍ່ສູງກວ່າ ແລະ ລົງທຶນທີ່ສູງກວ່າ;

10) ເຫດຜົນການໃຫ້ນະໂຍບາຍແກ່ ຜູ້ຜະລິດແນວພັນພືດອາຫານສັດເປັນສິນຄ້າ ໂດຍສະເໜີແຫຼ່ງເງິນກູ້ ເກີນ 3 ປີ ອັດຕາດອກເບ້ຍ 3% ປອດດອກເບ້ຍ 3 ປີ ແລະ ປອດຕົ້ນ 2 ປີ, ຍ້ອນວ່າເປັນກິດຈະການທີ່ສໍາຄັນ ແລະ ຈໍາເປັນ ທີ່ປະເທດເຮົາ ຍັງບໍ່ທັນມີ ຍັງອາໄສແຕ່ການນໍາເຂົ້າ, ການຜະລິດແນວພັນພືດອາຫານສັດ ແມ່ນໃຫ້ຜົນຜະລິດຕໍ່ເນື້ອທີ່ຕໍ່າກວ່າການປູກເຂົ້າ ຫຼື ພືດອື່ນ;

11) ເຫດຜົນການໃຫ້ນະໂຍບາຍ ແກ່ຜູ້ປະກອບການໂຮງງານຂ້າສັດທັນສະໄໝ ແລະ ໂຮງງານປຸງແຕ່ງຜະລິດຕະພັນສັດ ແລະ ສັດນໍ້າ ໂດຍສະເໜີ ແຫຼ່ງທຶນກູ້ເກີນ 5 ປີ, ອັດຕາດອກເບ້ຍ 5% ປອດດອກເບ້ຍ 2 ປີ ແລະ ປອດຕົ້ນ

3 ປີ, ຍ້ອນເຫັນວ່າເປັນກິດຈະການທີ່ຕ້ອງການສົ່ງເສີມ ແລະ ມີຄວາມຈຳເປັນຕ້ອງໄດ້ຍົກຄຸນນະພາບ ຄວາມປອດໄພ ຈຶ່ງຈະສາມາດແຂ່ງຂັນໄດ້, ຕ້ອງໄດ້ປັບປຸງຕ່ອງໂສ້ການຜະລິດໃຫ້ເປັນລະບົບ, ປະຕິຮູບໂຮງຂ້າສັດ ແລະ ການປຸງແຕ່ງ ແບບບໍ່ສະອາດ ໃຫ້ເປັນທັນສະໄໝ ຖືກຫຼັກ ສຸຂານາໄມ;

12) ເຫດຜົນການໃຫ້ນະໂຍບາຍແກ່ຜູ້ປະກອບການຜະລິດຢາສັດຕະວະແພດ ໂດຍສະເໜີໄລຍະກູ້ເກີນ 10 ປີ ອັດຕາດອກເບ້ຍ 3% ປອດດອກເບ້ຍ 3 ປີ ແລະ ປອດດອກ 4 ປີ ຍ້ອນວ່າເປັນກິດຈະການທີ່ຕ້ອງການສົ່ງເສີມ ຍ້ອນ ສປປ ລາວ ຍັງອາໄສນຳເຂົ້າຈາກຕ່າງປະເທດ ແລະ ຍັງຂາດເຂີນດ້ານຢາສັດຕະວະແພດຢ່າງຫຼວງຫຼາຍ;

13) ເຫດຜົນໃຫ້ນະໂຍບາຍແກ່ຜູ້ຜະລິດນ້ຳເຊື້ອສັດ ສະໜອງໃຫ້ແກ່ ການປະສົມພັນທຽມເຂົ້າແຫຼ່ງເງິນກູ້ເກີນ 3 ປີ, ອັດຕາດອກເບ້ຍ 3 ປອດດອກເບ້ຍ 2 ປີ ແລະ ປອດຕົ້ນ 2 ປີ ນັ້ນ ຍ້ອນວ່າເປັນກິດຈະການທີ່ຕ້ອງການສົ່ງເສີມ ຍ້ອນ ການປະສົມພັນສັດຂອງ ສປປ ລາວ ຍັງເປັນແບບທຳມະຊາດ ມີຄວາມຕ້ອງການຕ້ອງໄດ້ຫັນປ່ຽນ ຈຶ່ງຈະສາມາດຍົກລະດັບການຜະລິດສັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນໄດ້.

ເຫດຜົນທັງໝົດເລົ່ານີ້ ແມ່ນເປັນບ່ອນອີງຂອງການຂໍນະໂຍບາຍດ້ານການເງິນ ແລະ ການເຂົ້າເຖິງແຫຼ່ງທຶນ ຂອງຜູ້ປະກອບການ ຕັ້ງແຕ່ຂັ້ນຕອນການຜະລິດຈົນເຖິງການປຸງແຕ່ງ. ຊຶ່ງຂໍໃຫ້ຫຼຸດຈາກການກຳນົດອັດຕາ ດອກເບ້ຍ, ໄລຍະເວລາກູ້ຢືມ, ການຈ່າຍດອກເບ້ຍ ແລະ ສົ່ງທຶນຄືນ ໃຫ້ຕ່ຳກວ່ານະໂຍບາຍເງິນກູ້ທີ່ທະນາຄານການຄ້າທົ່ວ ໄປກຳນົດ ຄືສ່ວນໃຫຍ່ ແມ່ນໄລຍະກູ້ໃຫ້ແກ່ກະສິກຳບໍ່ເກີນ 5 ປີ ແລະ ອັດຕາດອກເບ້ຍເງິນກູ້ແມ່ນປະມານ 9-10%.